# ຕົວຊີ້ວັດການປ່ຽນແປງນະໂຍບາຍນຳໃຊ້ທີ່ດິນ ຢູ່ເຂດພາກເໜືອຂອງລາວ

*ລິນຄຳ ດວງສະຫວັນ[1,2],ພູວຽງ ລັດດາວົງ[1], ບຸນຖະໜອມ ບົວທອມ[1,2], Jean-Christophe Castella[2,3]*

## ບົດຄັດຫຍໍ້

ໃນໄລຍະຊຸມປີ 2000 ທີ່ຜ່ານມານີ້, ໄດ້ເກີດມີຫຼາຍສິ່ງຫຼາຍຢ່າງປ່ຽນແປງຢູ່ເຂດພາກເໜືອຂອງລາວ, ຊຶ່ງເປັນເຂດທີ່ໄດ້ຮັບອິດທິພົນ ຈາກຄວາມຫຼາກຫຼາຍທາງດ້ານນະໂຍບາຍລັດຖະບານເປັນຕົ້ນແມ່ນນະໂຍບາຍຊຸກຍູ້ສົ່ງເສີມການລົງທຶນຕ່າງປະເທດ ແລະ ການຊ່ວຍເຫຼືອດ້ານການພັດທະນາໃນຮູບການຮ່ວມມືສອງຝ່າຍ ຫຼື ຫຼາຍຝ່າຍ ຫຼື ຈາກອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ. ຊຶ່ງເຫັນໄດ້ວ່າທັງສາມອິດທິພົນດັ່ງກ່າວນີ້ແມ່ນລ້ວນແລ້ວແຕ່ກ່ຽວພັນເຖິງການຮ່ວມມືກັນໂດຍອີງຕາມເປົ້າໝາຍ ແລະ ພາລະບົດບາດຂອງແຕ່ລະອົງການ. ຊຶ່ງໄດ້ມີການກຳນົດເອົາກົດລະບຽບອັນໃໝ່, ສ້າງໂອກາດ ແລະ ບາງຄັ້ງກໍ່ນຳເອົາຄວາມສ່ຽງມາສູ່ປະຊາຊົນພາຍໃນທ້ອງຖິ່ນຜູ້ທີ່ຕ້ອງໄດ້ມີການປັບຕົວໃຫ້ແທດເໝາະກັບສະພາບການປ່ຽນແປງຕ່າງໆ.

ໃນບົດລາຍງານໂດຍສັງເຂບສະບັບນີ້, ແມ່ນເປັນບົດທີ່ສຶກສາກ່ຽວກັບຄວາມອາດສາມາດເປັນໄປໄດ້ຂອງການປັບຕົວເຂົ້າກັບນະໂຍບາຍໃນປະຈຸບັນທີ່ອຳນວຍໃຫ້ແກ່ການປ່ຽນແປງທາງດ້ານລະບົບການຜະລິດກະສິກຳໃນເຂດພູດອຍ ໃນການຫັນປ່ຽນມາປູກພືດເປັນສິນຄ້າ ເພື່ອເປັນການຫຼີກລ້ຽງຈາກການຜັກດັນຂອງພາຍນອກ. ເນື່ອງຈາກວ່າ ຊາວກະສິກອນມີຄວາມອາດສາມາດ ໃນການປັບຕົວຕໍ່ການປ່ຽນແປງ ແລະ ການຮັບເອົາເຕັກນິກນະວັດຕະກຳອັນໃໝ່ທີ່ໄດ້ຮັບການຄຸ້ມຄອງຈາກການສະໜອງນະໂຍບາຍ ສິ່ງແວດລ້ອມທີ່ດີ.

[1] ສູນຄົ້ນຄວ້ານະໂຍບາຍ ກະສິກຳ ແລະ ປ່າໄມ້, ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ (NAFRI)

[2] ແຜນງານໂຄງການ Catch-Up, NAFRI-IRD-CIFOR

[3] ສະຖາບັນຄົ້ນຄວ້າ ເພື່ອການພັດທະນາ (IRD) ແລະ ສູນຄົ້ນຄວ້າປ່າໄມ້ ນາໆຊາດ (CIFOR)

# Policy implications of land use changes in the uplands of northern Lao PDR

*Linkham Douangsavanh[1,2], Phouvieng Laddavong[1], Bounthanom Bouahom[1,2],*
*Jean-Christophe Castella[2,3]*

## Abstract

The 2000s decade has seen a lot of changes in the northern uplands of Lao PDR that where driven by three main drivers or agents of change: government policies, foreign private investors and development assistance led by bilateral or multilateral organizations or international NGOs. These three spheres of influence are intimately connected and constantly interacting as they depend on each other's to reach their goals or fulfill their mandate. They have brought new rules, opportunities, and also risks to rural populations who had to cope with very rapid changes.

This paper explores possible adaptations to existing policies that would facilitate a smoother agrarian transition from subsistence to commercial agriculture; i.e. avoiding external chocks and maintaining the resilience of rural communities. Indeed, farmers' capacity to adapt to changes and to adopt technical and institutional innovations should be harnessed by providing a supportive policy environment.

[1] Agriculture and Forestry Policy Research Centre (AFPRC), National Agriculture and Forestry Research Institute (NAFRI), Vientiane, Lao PDR

[2] Catch-Up Program (Comprehensive Analysis of Trajectories of Change in the Uplands), NAFRI, Vientiane, Lao PDR

[3] Institut de Recherche pour le Développement (IRD, France) and Centre for International Forestry Research (CIFOR, Indonesia)

## 1. ພາກສະເໜີ

ໃນຊຸມປີທີ່ຜ່ານມາ, ລັດຖະບານລາວ ໄດ້ມີນະໂຍບາຍຊຸກຍູ້ສົ່ງເສີມກິດຈະກຳການປູກພືດເປັນສິນຄ້າ ເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ເພື່ອເຮັດໃຫ້ປະເທດຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາໃຫ້ໄດ້ໃນປີ 2020. ພ້ອມດຽວກັນນັ້ນ, ເພື່ອໃຫ້ສອດຄ່ອງກັບນະໂຍບາຍຢຸດຕິການຖາງປ່າເຮັດໄຮ່, ສ້າງຕັ້ງກຸ່ມບ້ານ ຈຸດສຸມພັດທະນາ, ການວາງແຜນນຳໃຊ້ທີ່ດິນ ແລະ ອື່ນໆ. ພ້ອມດຽວກັນນີ້, ລັດຖະບານ ກໍ່ໄດ້ເປີດປະຕູເສດຖະກິດ ໂດຍການຊຸກຍູ້ສົ່ງເສີມການລົງທຶນຕ່າງປະເທດ ໂດຍສະເພາະແມ່ນການລົງທຶນໃນຂະແໜງກະສິກຳ ແລະ ປ່າໄມ້ ເພື່ອເປັນການເພີ່ມການຂະຫຍາຍຕົວຂອງລາຍຮັບລວມຍອດຜະລິດແຫ່ງຊາດ ຕໍ່ຫົວຄົນໃຫ້ສູງຂຶ້ນ. ເຊັ່ນດຽວກັນກັບຂະບວນການເຊື່ອມໂຍງຕະຫຼາດໃຫ້ນັບມື້ນັບຂະຫຍາຍຕົວກວ້າງຂວາງອອກເທື່ອລະກ້າວ ແລະ ຂະບວນໂລກາພິວັດ ທີ່ພວມເອື້ອອຳນວຍກາລະໂອກາດອັນໃໝ່ໆໃນການພັດທະນາ.

ແນ່ນອນແລ້ວວ່າ, ການຫັນປ່ຽນລະບົບການຜະລິດກະສິກຳແບບກຸ້ມຕົນເອງໃຫ້ກາຍເປັນການຜະລິດສິນຄ້າ ແມ່ນໄດ້ຮັບອິດທິພົນມາຈາກກຳລັງການປ່ຽນແປງພາຍນອກ ແລະ ພາຍໃນ, ທັງຈາກທ້ອງຖິ່ນ ແລະ ຈາກພາກພື້ນ. ຊຶ່ງປັດໄຈຫຼັກແມ່ນເກີດມາຈາກການປ່ຽນແປງການນຳໃຊ້ທີ່ດິນໃນເຂດພູດອຍຂອງລາວ ຄື (i) ການປ່ຽນແປງຄວາມອາດສາມາດ ໃນການເຂົ້າເຖິງຕະຫຼາດ, ການສຶກສາ, ການບໍລິການດ້ານສຸຂະພາບ ແລະ ການບໍລິການຂໍ້ມູນຂ່າວສານດ້ານເຕັກນິກຕ່າງໆ, (ii) ການຂະຫຍາຍພື້ນທີ່ປູກໄມ້ອຸດສະຫະກຳທີ່ກ່ຽວພັນເຖິງຄວາມຕ້ອງການຂອງຕະຫຼາດຢາງພາລາ, ເຊື້ອໄຟຊີວະພາບ, ໄມ້ແປຮູບ, ອາຫານສັດ ແລະ ອື່ນໆ, (iii) ນະໂຍບາຍທີ່ດິນ ທີ່ພົວພັນເຖິງນະໂຍ ບາຍການວາງແຜນນຳໃຊ້ທີ່ດິນ, ການມອບດິນມອບປ່າ, ການເຕົ້າໂຮມບ້ານ ແລະ ການຍົກຍ້າຍບ້ານ, ການສຳປະທານທີ່ດິນ ແລະ ອື່ນໆ, (iv) ການສ້າງກົດລະບຽບທາງດ້ານສິ່ງແວດລ້ອມທີ່ແນໃສ່ການປ້ອງກັນການເຊື່ອມໂຊມຂອງດິນ, ປ້ອງກັນການຕັດໄມ້ທຳລາຍປ່າ, ປ້ອງກັນການສູນເສຍທາງດ້ານຊີວະນາໆພັນໃນເຂດພູດອຍ ເພື່ອສືບຕໍ່ຮັບມືກັບການປ່ຽນແປງທັດສະນີຍະພາບໃນເຂດພູດອຍໃນຊຸມປີຕໍ່ໜ້າ.

ສປປ ລາວ ແມ່ນປະເທດທີ່ອຸດົມຮັ່ງມີໄປດ້ວຍຊັບພະຍາກອນທຳມະຊາດແຕ່ຍັງທຸກຍາກ, ຖ້າວັດແທກທາງດ້ານດັດຊະນີການພັດທະນາ. ເຫັນໄດ້ວ່າ 90%ຂອງປະຊາກອນລາວທີ່ທຸກຍາກສ່ວນໃຫຍ່ແມ່ນອາໄສຢູ່ເຂດຊົນນະບົດຫ່າງໄກສອກຫຼີກໂດຍດຳລົງຊີວິດທີ່ຕິດພັນກັບການຜະລິດກະສິກຳແບບເພິ່ງພາທຳມະຊາດ. ເພາະສະນັ້ນ, ການປົກປັກຮັກສາທຳມະຊາດແມ່ນເປັນປັດໄຈທີ່ສຳຄັນຫຼາຍໃນການຫຼຸດຜ່ອນຄວາມທຸກຍາກ ແລະ ການຂະຫຍາຍຕົວທາງດ້ານເສດຖະກິດ ເນື່ອງຈາກວ່າ 80% ຂອງລາຍຮັບລວມຍອດຜະລິດຕະພັນແຫ່ງຊາດແມ່ນໄດ້ຮັບຈາກຊັບພະຍາກອນທຳມະຊາດ ຊຶ່ງມີບົດບາດສຳຄັນໃນການພັດທະນາເສດຖະກິດ ແລະ ສັງຄົມຂອງຊາດເຊັ່ນຕົວຢ່າງ: ຊັບພະຍາກອນປ່າໄມ້, ແມ່ນ້ຳ ແລະ ຫ້ວຍຮອງຄອງບຶງ, ແຕ່ຊັບພະຍາກອນເຫຼົ່ານັ້ນກຳລັງຖືກຄຸກຄາມຊຶ່ງມີຜົນຕໍ່ການເຕີບໂຕທາງດ້ານເສດຖະກິດ ແລະ ເຮັດໃຫ້ການບັນລຸເປົ້າໝາຍຫຼຸດ

ຜ່ອນຄວາມທຸກຍາກແມ່ນນັບມື້ນັບຍາກລຳບາກຂື້ນ. ເພາະສະນັ້ນ, ຈຶ່ງຈຳເປັນທີ່ຈະຕ້ອງໄດ້ປົກປັກຮັກສາ ແລະ ນຳໃຊ້ໃຫ້ຍືນຍົງ.

ພາຍໃຕ້ວິໄສທັດດັ່ງກ່າວມາຂ້າງເທິງນັ້ນ ໄດ້ມີການການສ້າງນະໂຍບາຍໃໝ່ທີ່ໄດ້ຮັບການພັດທະນາສຳລັບຂະແໜງການຄົ້ນຄວ້າ ແລະ ການບໍລິການຊຸກຍູ້ສົ່ງເສີມ, ແນໃສ່ການສ້າງຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດງານຢູ່ຂັ້ນແຂວງ, ເມືອງ ແລະ ບ້ານ. ໂດຍສະເພາະວິທີການທີ່ໄດ້ຖືກພັດທະນາໃນການຈັດການຄຸ້ມຄອງອ່າງໂຕ່ງແບບປະສົມປະສານ. ນອກຈາກນີ້, ລັດຖະບານຍັງໄດ້ສະໜັບສະໜູນໃຫ້ອົງການສາກົນເຂົ້າມາຊຸກຍູ້ສົ່ງເສີມການຈັດຕັ້ງປະຕິບັດແຜນງານມອບດິນມອບປ່າ, ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ແລະ ການເຕົ້າໂຮມບ້ານທີ່ໄດ້ລິເລີ່ມຈັດຕັ້ງປະຕິບັດໄປໃນທົ່ວປະເທດ. ເຖິງຢ່າງໃດກໍ່ຕາມ, ຜົນສຳເລັດທີ່ທ້ອງຖິ່ນໄດ້ຮັບໃນໄລຍະການດຳເນີນງານຂອງໂຄງການດັ່ງກ່າວກໍ່ຍັງມີບາງຄຳຖາມທີ່ຍັງຄ້າງຄາຢູ່ເປັນຕົ້ນແມ່ນ:

- ຈະເຮັດແນວໃດ ເພື່ອເຮັດໃຫ້ປະສົບການທີ່ຫຼາກຫຼາຍນັ້ນຖືກນຳເຂົ້າໄປໃນຂະບວນການສ້າງເປັນນະໂຍບາຍທີ່ຈະສາມາດເຮັດໃຫ້ເກີດຜົນທາງກວ້າງໂດຍໃຫ້ມີປະສິດຕິພາບທີ່ຍືນຍົງພາຍຫຼັງໝົດອາຍຸການຂອງແຕ່ລະໂຄງການ.

- ຈະເຮັດແນວໃດ ເພື່ອຫຼຸດຜ່ອນຜົນກະທົບທາງດ້ານລົບຈາກການພັດທະນາທີ່ມີຕໍ່ສັງຄົມ ແລະ ສິ່ງແວດລ້ອມ? ມີມາດຕະການສະ ໜັບສະໜູນ ແລະ ລະບຽບກົດໝາຍອັນໃດແດ່ທີ່ຈຳເປັນຈະຕ້ອງໄດ້ສ້າງຂື້ນ.

ການດັດປັບນະໂຍບາຍ ທີ່ກ່ຽວຂ້ອງກັບການຄົ້ນຄວ້າ ແມ່ນມີຄວາມຈຳເປັນຕ້ອງໄປພ້ອມກັບການປ່ຽນແປງທາງດ້ານສະຖາບັນທີ່ກ່ຽວຂ້ອງເພື່ອກ້າວໄປສູ່ເສັ້ນທາງການພັດທະນາແບບຍືນຍົງໂດຍການດັດປັບໃຫ້ເຂົ້າກັບຄວາມຫຼາກຫຼາຍທາງດ້ານສະພາບການຕົວຈິງໃນທ້ອງຖິ່ນ. ຊຶ່ງບົດລາຍງານສະບັບນີ້, ໄດ້ຖອດຖອນບົດຮຽນຈາກການຄົ້ນຄວ້າດ້ານນະໂຍບາຍຢູ່ໃນຫຼາຍໆພື້ນທີ່ທີ່ໄດ້ສຶກສາຄົ້ນຄວ້າຜ່ານມາໂດຍຜ່ານແຜນງານໂຄງການ Catch-Up ທີ່ໄດ້ເລີ່ມຈັດຕັ້ງປະຕິບັດສຶກສາຄົ້ນຄວ້າຢູ່ ໃນເຂດພາກເໜືອຂອງລາວມາຕັ້ງແຕ່ປີ 2008-2010. ພາຍຫຼັງສຳເລັດການທົບທວນເອກກະສານຕ່າງໆທີ່ກ່ຽວຂ້ອງກັບການປ່ຽນແປງການນຳໃຊ້ທີ່ດິນທີ່ມີຜົນກະທົບຕໍ່ການປ່ຽນແປງທັດສະນີຍະພາບທາງພື້ນທີ່ ແລະ ຊີວິດການເປັນຢູ່ຂອງປະຊາຊົນພາຍໃນທ້ອງຖິ່ນໃນໄລຍະທົດສະວັດທີ່ຜ່ານມາເຫັນວ່າການດັດປັບດ້ານນະໂຍບາຍກໍ່ໄດ້ຖືກນຳສະເໜີຂື້ນເພື່ອໃຫ້ສາມາດຮັບມືກັບການປ່ຽນແປງທີ່ກຳລັງເກີດຂື້ນໃນປະຈຸບັນ. ດັ່ງນັ້ນ, ຜົນສະທ້ອນໃນແງ່ຂອງການຄົ້ນຄວ້າທາງດ້ານນະໂຍບາຍ ແລະ ການສ້າງຄວາມອາດສາມາດແມ່ນຈະໄດ້ຖືກນຳສະເໜີໃນບັນດາຫົວຂໍ້ຕໍ່ໄປນີ້.

## 2. ກະສິກຳ – ປ່າໄມ້, ການຄ້ຳປະກັນສະບຽງອາຫານ ແລະ ຄວາມທຸກຍາກໃນ ສ ປປ ລາວ

ຂະແໜງກະສິກຳ ແລະ ປ່າໄມ້ກໍ່ເປັນຂະແໜງການໜຶ່ງທີ່ສຳຄັນຂອງເສດຖະກິດແຫ່ງຊາດ ແລະ ມີສ່ວນສະໜັບສະໜູນ ໃຫ້ການພັດທະນາໃນຫຼາຍຂະແໜງການເປັນຕົ້ນ: ຂະແໜງການອຸດສະຫະກຳ, ການຄ້າ ແລະ ການບໍລິການ. ໃນຂະ

ນະທີ່ລາຍຮັບລວມຍອດຜະລິດຕະພັນແຫ່ງຊາດຂອງຂະແໜງການດັ່ງກ່າວແມ່ນໄດ້ຫຼຸດລົງຈາກ 50% ໃນປີ 2001 ມາເປັນ 40% ໃນປີ 2005-2006 ແລະ ຫຼຸດລົງເປັນ 33% ໃນປີ 2009, ອັດສ່ວນຂອງຂະແໜງກະສິກຳທີ່ປະກອບສ່ວນເຂົ້າໃນລາຍຮັບລວມຍອດຜະລິດຕະພັນແຫ່ງຊາດ (GDP) ກວມ 32% ໃນໂຄງສ້າງເສດຖະກິດແຫ່ງຊາດ ຊຶ່ງຖືກຈັດເປັນອັນດັບທີສອງຮອງຈາກຂະແໜງບໍລິການ (35%).

ການສ້າງຄວາມເຂັ້ມແຂງໃຫ້ຊາວກະສິກອນພາຍໃນທ້ອງຖິ່ນ ແລະ ການປັບປຸງລະບົບການຜະລິດກະສິກຳຍັງຄົງເປັນອົງປະກອບທີ່ເປັນໃຈກາງຂອງຄວາມພະຍາຍາມເພື່ອຫຼຸດຜ່ອນຄວາມທຸກຍາກໃນໄລຍະຍາວ. ເລີ່ມຕັ້ງແຕ່ການປະຕິຮູບກົນໄກເສດຖະກິດໃໝ່ໃນປີ 1986, ຍຸດທະສາດຂອງພັກປະຊາຊົນປະຕິວັດລາວໄດ້ເນັ້ນເຖິງຄວາມສຳຄັນຂອງວຽກງານຂະແໜງກະສິກຳ ແລະ ປ່າໄມ້ ເພື່ອພັດທະນາຊົນນະບົດ. ພາຍໃຕ້ຍຸດທະສາດດັ່ງກ່າວນີ້, ຈຶ່ງມີຄວາມຈຳເປັນຕ້ອງໄດ້ມີການພັດທະນາກຳລັງການຜະລິດ ເພື່ອປັບປຸງປະສິດທິພາບຂອງການຜະລິດ ແລະສົ່ງເສີມການຜະລິດໃນຮູບແບບກະເສດສຸມ, ການຜະລິດເປັນສິນຄ້າ ແລະ ອຸດສະຫະກຳປຸງແຕ່ງ. ໃນລະດັບກະຊວງກະສິກຳ ແລະ ປ່າໄມ້ ກໍ່ໄດ້ກຳນົດຍຸດທະສາດກະສິກຳ ແລະ ປ່າໄມ້ ໃນປີ 2006 ໄດ້ຖືກຜັນຂະຫຍາຍເຂົ້າໃນ 4 ເປົ້າໝາຍດັ່ງ ທີ່ໄດ້ລະບຸໄວ້ໃນຕາຕະລາງ 1. ຕົກມາເຖິງປີ 2010, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ທົບທວນຄືນເຖິງ ຜົນທີ່ໄດ້ຮັບຈາກການຈັດຕັ້ງປະຕິບັດວຽກງານ ໃນໄລຍະທີ່ຜ່ານມາພ້ອມທັງວາງແຜນຍຸດທະສາດສຳລັບສົກປີ 2011-2020 *(ຕາຕະລາງ 1)*. ວິໄສທັດຂອງຍຸດທະສາດການຜະລິດກະສິກຳ ແລະ ປ່າໄມ້ຕອບສະໜອງຄວາມຕ້ອງການຂອງຕະຫຼາດ ໂດຍອີງໃສ່ການພັດທະນາເສດຖະກິດເປັນຕົ້ນຕໍ ແລະ ເພື່ອຫຼຸດຜ່ອນຄວາມທຸກຍາກ. ຊຶ່ງບໍ່ໄດ້ສ້າງຜົນເສຍຫາຍໃຫ້ແກ່ພື້ນຖານຂອງຊັບພະຍາກອນທຳມະຊາດ ອັນເປັນສິ່ງຈຳເປັນຕໍ່ຊີວິດການເປັນຢູ່ຂອງປະຊາຊົນພາຍໃນທ້ອງຖິ່ນ.

ຈຸດປະສົງ ທີ່ສຳຄັນຂອງນະໂຍບາຍ ຈຶ່ງເນັ້ນເພື່ອປັບປຸງການຄໍ້າປະກັນສະບຽງອາຫານພາຍໃນຫົວໜ່ວຍຄອບຄົວ, ປັບປຸງມາດຖານຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ, ຫຼຸດຜ່ອນຄວາມແຕກໂຕນກັນລະຫວ່າງຮູບແບບການຜະລິດໃນເຂດພູດອຍ ແລະ ເຂດທົ່ງພຽງ ແລະ ເພີ່ມທະວີມາດຕະການຄຸ້ມຄອງປ່າໄມ້ ແລະ ອ່າງໂຕ່ງແບບຍືນຍົງ. ນັບແຕ່ປີ 2000 ເປັນຕົ້ນມາ, ປະເທດລາວໄດ້ບັນລຸຕາມລະດັບຄວາມກຸ້ມຢູ່ກຸ້ມກິນ (ສາມາດຜະລິດເຂົ້າກຸ້ມກິນຕາມຄາດໝາຍ 350 ກິໂລ/ຫົວຄົນ/ປີ), ໂດຍການປູກພືດຫຼາຍຊະນິດ ເຊັ່ນ: ເຂົ້າ, ສາລີ ແລະ ພືດຜັກອື່ນໆ ຊຶ່ງຜົນຜະລິດຈຳນວນໜຶ່ງກໍ່ສາມາດສົ່ງອອກ, ເປັນຕົ້ນແມ່ນເຂົ້າໜຽວ, ສາລີ, ກາເຟ, ຊາ, ສັດລ້ຽງ, ພືດຜັກ ແລະ ເຄື່ອງປ່າຂອງດົງຫຼາຍຊະນິດ. ໃນຊຸມປີ 2000-2008, ລວມຍອດຜະລິດແຫ່ງຊາດທີ່ໄດ້ຈາກຂະແໜງກະສິກຳ ແລະ ປ່າໄມ້ແມ່ນຫຼຸດລົງແຕ່ວ່າລາຍຮັບຈາກການລ້ຽງສັດ ແລະ ການປະມົງພັດມີທ່າອ່ຽງເພີ່ມຂຶ້ນ (ກວມ 40%) ໄດ້ຈາກການປູກພືດ 55% ແລະ ອີກ 5% ແມ່ນໄດ້ຈາກປ່າໄມ້ (ກະຊວງກະສິກຳ

ແລະ ປ່າໄມ້, 2008). ໂດຍລວມແລ້ວຍຸດທະສາດຂອງລັດຖະບານທີ່ພົວພັນເຖິງການຄໍ້າປະກັນສະບຽງອາຫານ ໂດຍສະເພາະແມ່ນການຜະລິດ ເພື່ອໃຫ້ມີເຂົ້າກຸ້ມກິນຕະຫຼອດປີ ທີ່ໄດ້ຈັດຕັ້ງປະຕິບັດຜ່ານ 3 ນະໂຍບາຍຫຼັກດັ່ງລຸ່ມນີ້:

• *ການຜະລິດກະເສດສຸມ:* ໂດຍນໍາໃຊ້ຊົນລະປະທານເຂົ້າຊ່ວຍ: ການສົ່ງເສີມການຜະລິດເປັນຕົ້ນແມ່ນການເຮັດນາແຊງໂດຍນໍາໃຊ້ນໍ້າຊົນລະປະທານກວມເນື້ອທີ່ 94.000 ເຮັກຕາ ພາຍໃນປີ 2008. ຊຶ່ງກິດຈະກໍາການຊຸກຍູ້ສົ່ງເສີມເຫຼົ່ານີ້ຍັງໄດ້ຮັບຜົນຕໍ່າ ເມື່ອທຽບໃສ່ເປົ້າໝາຍຂອງລັດຖະບານທີ່ໄດ້ວາງໄວ້ເຖິງ 115.000 ເຮັກຕາ. ເຖິງຢ່າງໃດກໍ່ຕາມ, ມາດຕະການສໍາລັບການປັບປຸງສະມັດຕະພາບຂອງການຜະລິດເຂົ້າ ແລະ ການບູລະນະສ້ອມແຊມຊົນລະປະທານແມ່ນຍັງມີຄວາມຈໍາເປັນ ເພື່ອໃຫ້ບັນລຸຄາດໝາຍໃນຊຸມປີຕໍ່ໜ້າ.

• *ການຄວບຄຸມນໍ້າຖ້ວມ:* ຖືເປັນບູລິມະສິດໜຶ່ງທີ່ຈະຕ້ອງໄດ້ແກ້ໄຂບັນຫານໍ້າຖ້ວມ ຊຶ່ງເປັນສາເຫດເຮັດໃຫ້ຊົນລະປະທານ ແລະ ລະບົບຄອງເໝືອງໄດ້ຮັບຄວາມເສຍຫາຍເປ່ເພ, ເຮັດໃຫ້ຜົນຜະລິດຂອງຊາວກະສິກອນໄດ້ຮັບຄວາມເສຍຫາຍເຊັ່ນດຽວກັນ.

• *ການເກັບສໍາຮອງເຂົ້າ-ທະນາຄານເຂົ້າ:* ການເກັບສະສົມເຂົ້າ ກໍ່ເປັນອົງປະກອບໜຶ່ງທີ່ສໍາຄັນຂອງນະໂຍບາຍຄໍ້າປະກັນສະບຽງອາຫານ ເພື່ອດັດປັບລາຄາເຂົ້າ ແລະ ປະກອບສ່ວນໃນການບັນເທົາທຸກໃຫ້ແກ່ຊາວກະສິກອນໃນເວລາເກີດໄພພິບັດທາງທໍາມະຊາດ. ດັ່ງນັ້ນ, ລັດຖະບານລາວ ຈຶ່ງໄດ້ສ້າງ ແລະ ພັດທະນາຊັບພະຍາກອນມະນຸດ ໃນການສ້າງຕັ້ງທະນາຄານເຂົ້າຂື້ນ ຊຶ່ງມີຄວາມຈໍາເປັນໃນການເກັບສະສົມໄວ້ ເພື່ອຊົມໃຊ້ທັງໃນໄລຍະສັ້ນ ແລະ ໄລຍະຍາວເມື່ອມີຄວາມຕ້ອງການ.

ໃນບ່ອນທີ່ມີການຄໍ້າປະກັນທາງດ້ານສະບຽງອາຫານແລ້ວ ລັດຖະບານ ຍັງໄດ້ແກ້ໄຂບັນຫາຄວາມທຸກຍາກ ໃນເຂດຊົນນະບົດ ໂດຍການສະໜອງລະບົບທາງເລືອກໃນການດໍາລົງຊີວິດ ໂດຍສະເພາະແມ່ນການສົ່ງເສີມໃຫ້ໂອກາດໃນການຈ້າງງານທີ່ໝັ້ນຄົງຍາວນານໃຫ້ປະຊາຊົນພາຍໃນຊົນນະບົດ.

ການຄ້າຜ່ານແດນ ໄດ້ກາຍເປັນປັດໄຈສໍາຄັນຂອງການພັດທະນາ ທີ່ເປັນຜົນດີໃຫ້ແກ່ພໍ່ຄ້າທັງພາຍໃນ ແລະ ພາກພື້ນ, ເນື່ອງຈາກວ່າລັດຖະບານໄດ້ມີນະໂຍບາຍ ຊຸກຍູ້ສົ່ງເສີມການລົງທຶນຈາກຕ່າງປະເທດ ເພື່ອຜະລິດສິນຄ້າກະສິກໍາທີ່ຕະຫຼາດຕ້ອງການຢູ່ໃນປະເທດຈີນ, ໄທ ແລະ ຫວຽດນາມ. ທ່າອ່ຽງດັ່ງກ່າວນີ້ ແມ່ນນໍາໄປສູ່ການເພີ່ມຄວາມຫຼາກຫຼາຍທາງເລືອກຂອງການຜະລິດໃຫ້ແກ່ຊາວກະສິກອນເຂດພູດອຍທີ່ເຄີຍເຮັດແຕ່ການຜະລິດ ໃນຮູບແບບການປູກເຂົ້າໄຮ່ ແລະ ການປູກພືດສະເພາະເປັນສິນຄ້າໃນຈໍານວນທີ່ຈໍາກັດເທົ່ານັ້ນ. ເຖິງຢ່າງໃດກໍ່ຕາມ, ຜົນຜະລິດກະສິກໍາແມ່ນຍັງຄົງຢູ່ໃນລະດັບກຸ້ມຢູ່ກຸ້ມກິນ. ເຂົ້າເປັນອາຫານຫຼັກຂອງຊາວລາວແຕ່ຜະລິດ ຕະພາບແມ່ນຍັງຕໍ່າ ແລະ ຍັງບໍ່ພຽງພໍກັບຄວາມຮຽກຮ້ອງຕ້ອງການຂອງຊາວກະສິກອນ

ໃນເຂດພູດອຍ. ສຳລັບການປູກພືດເປັນສິນຄ້າ ເຊັ່ນ: ສາລີ, ຖົ່ວ, ກາເຟ, ຢາສູບ ແລະ ພືດຜັກອື່ນໆ (ກະລ່ຳ, ໝາກເລັ່ນ, ໝາກເຂືອ, ສະຫຼັດ, ພິກໄທ, ໝາກແຕງ ແລະ ໝາກໂມ). ສ່ວນການລ້ຽງສັດເຊັ່ນ: ງົວ, ປາພື້ນເມືອງ ແລະ ການເກັບເຄື່ອງປ່າຂອງດົງໄດ້ແກ່ໝາກແໜ່ງ, ຫວາຍ ແລະ ຂີ້ຊີກໍ່ສາມາດສ້າງລາຍຮັບທີ່ສຳຄັນເຂົ້າສູ່ປະເທດໄດ້ເຊັ່ນດຽວກັນ.

ໃນທາງທີ່ດຸ່ນດ່ຽງກັນ, ການປັບປຸງການເຂົ້າເຖິງຕະຫຼາດ ໄດ້ນຳຜົນມາສູ່ ການເພີ່ມໂອກາດໃຫ້ກັບຊຸມຊົນຊົນນະບົດ, ມີບາງຄອບຄົວທີ່ສາມາດ ຫັນປ່ຽນຮູບແບບການຜະລິດແບບດັ້ງເດີມມາທຳການຜະລິດເປັນສິນຄ້ານັ້ນເຫັນໄດ້ວ່າເປັນຜົນດີຢ່າງຍິ່ງ ທີ່ສາມາດເຮັດໃຫ້ຄອບຄົວຫຼຸດພົ້ນອອກຈາກຄວາມທຸກຍາກໄດ້. ເບິ່ງຈາກຝ່າຍລັດຖະບານແລ້ວ, ປາກົດວ່າເປົ້າໝາຍນະໂຍບາຍຂອງລັດຖະບານກ່ຽວກັບການຫຼຸດຜ່ອນການຖາງປ່າເຮັດໄຮ່ແບບເລື່ອນລອຍ ແລະ ເພີ່ມການລົງທຶນ ຈາກຕ່າງປະເທດ ກໍ່ນັບມື້ໄດ້ຮັບຜົນສຳເລັດ. ເຖິງຢ່າງໃດກໍ່ຕາມ, ໃນການປ່ຽນແປງດັ່ງກ່າວນັ້ນຍັງມີບາງຜົນກະທົບທາງລົບຕໍ່ດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມແບບບັງເອີນຢູ່ໃນຂົງເຂດພື້ນທີ່ທີ່ໄດ້ຮັບການພັດທະນາໃນທຸກລະດັບ (ພື້ນທີ່ທຳການຜະລິດ, ເຂດອ່າງໂຕ່ງ ແລະ ທັດສະນີຍະພາບພື້ນທີ່). ເປັນສິ່ງສຳຄັນຢ່າງຍິ່ງທີ່ລັດຖະບານລາວ ຕ້ອງຮັບປະກັນວ່າວິກິດການທາງດ້ານການເງິນໂລກ, ວິກິດການດ້ານອາຫານ ແລະ ສະພາບການປ່ຽນແປງຂອງດິນຟ້າອາກາດ ຂອງບັນດານະໂຍບາຍ ທີ່ໄດ້ຈັດຕັ້ງປະຕິບັດຜ່ານມາ ຈະບໍ່ມີຜົນສະທ້ອນກັບມາທຳລາຍໝາກຜົນທີ່ໄດ້ຮັບໃນໄລຍະຜ່ານມາ.

## 3. ການນຳເອົາຊາວກະສິກອນ ຜູ້ຜະລິດຂະໜາດນ້ອຍ ເຂົ້າສູ່ຕ່ອງໂສ້ມູນຄ່າທັງຢູ່ພາຍໃນ ແລະ ລະດັບພາກພື້ນ

ເມື່ອມີການນຳເອົາຊາວກະສິກອນຜູ້ຜະລິດຂະໜາດນ້ອຍ ເຂົ້າສູ່ການຜະລິດ ເປັນສິນຄ້າແລ້ວຕະຫຼາດເສດຖະກິດ ໃນລະດັບຂົງເຂດ ແລະ ລະດັບພາກພື້ນ ກໍ່ຍັງຈຳເປັນຕ້ອງໄດ້ມີການໄຫວຕົວຢ່າງວ່ອງໄວອີກດ້ວຍ. ເພາະສະນັ້ນ, ມັນຈຶ່ງມີຄວາມສຳຄັນ ໃນການປະເມີນໂອກາດທາງດ້ານການຕະຫຼາດ ໂດຍຜ່ານການສັງເກດການໃນລະດັບຂົງເຂດ. ນອກຈາກນີ້, ການແລກປ່ຽນຂໍ້ມູນຂ່າວສານ ແລະ ການສ້າງຂໍ້ຕົກລົງທາງດ້ານການຄ້າກໍ່ມີຄວາມສຳຄັນໃນການສະໜັບສະໜູນນະໂຍບາຍແຫ່ງຊາດ. ຊຶ່ງພວກເຮົາຈຳເປັນຕ້ອງໄດ້ຮັບຮູ້ເຖິງຈຸດອ່ອນ ຂອງ ສປປ ລາວ (ການເຂົ້າເຖິງພື້ນຖານໂຄງລ່າງ, ການຈັດຕັ້ງກຸ່ມຜູ້ຜະລິດຍັງມີຈຳນວນໜ້ອຍ, ຕົ້ນທຶນໃນການຜະລິດ ແລະ ຄວາມອາດສາມາດ ໃນການເຂົ້າເຖິງຕະຫຼາດແມ່ນຍັງຕ່ຳ) ເມື່ອສົມທຽບກັບປະເທດອື່ນໆ ທີ່ເຂົາເຈົ້າ ສາມາດຫັນປ່ຽນວິກິດ ໃຫ້ເປັນໂອກາດກັບຄູ່ຮ່ວມງານ (ເປົ້າໝາຍການລົງທຶນ ແລະ ການຕະຫຼາດທີ່ເປັນຂະບວນການ, ພ້ອມທັງມີການພັດທະນາຊັບພະຍາກອນມະນຸດໃຫ້ມີຄວາມພ້ອມ).

### 3.1 ການພັດທະນາ ຕ່ອງໂສ້ການຜະລິດເລີ່ມຈາກການຜະລິດໄປຮອດຂະບວນການປຸງແຕ່ງ-ການຕະຫຼາດ

ຕ່ອງໂສ້ການຜະລິດ ມັກຈະຖືກຈຳກັດວັດຖຸດິບ ເນື່ອງຈາກຂາດຄວາມອາດສາມາດ ໃນຂະບວນການປຸງແຕ່ງຜະລິດຕະພັນ. ເພາະສະນັ້ນ,

ຈຶ່ງເປັນການບີບ ໃຫ້ມີການສົ່ງອອກວັດຖຸດິບທາງດ້ານກະສິກຳພຽງຢ່າງດຽວ. ດັ່ງນັ້ນ, ການພັດທະນາຕ່ອງໂສ້ການຜະລິດ ລວມທັງການປຸງແຕ່ງ ແລະ ການຕະຫຼາດໃນຊຸມປີຕໍ່ໜ້າ ແມ່ນຈະຕ້ອງໄດ້ມີການສຸມໃສ່ຢ່າງເປັນຂະບວນ ໂດຍອາໄສການສະໜັບສະໜູນການລົງທຶນທັງພາຍໃນ ແລະ ຕ່າງປະເທດ ໃນດ້ານອຸດສະຫະກຳປຸງແຕ່ງຜົນຜະລິດກະສິກຳ, ການສົ່ງເສີມ ແລະ ການບໍລິການທາງດ້ານການຕະຫຼາດໂດຍສະເພາະແມ່ນກໍລະນີຂອງການປູກສາລີ,ກາເຟ ແລະ ສັດລ້ຽງ. ນອກຈາກນີ້, ບໍລິສັດເອກກະຊົນ ຫຼື ສະຫະກອນຜູ້ຜະລິດ ກໍ່ຍັງໄດ້ຮັບການສະໜັບສະໜູນຈາກລັດຖະບານຖ້າຫາກພວກເຂົາເຈົ້າສາມາດ ຈັດການຄຸ້ມຄອງ ໃຫ້ເກີດເປັນສະມາຄົມຢ່າງດີ ເຊັ່ນ: ສະມາຄົມຜູ້ຜະລິດກາເຟຢູ່ເຂດພູພຽງບໍລິເວນ ຫຼື ສະມາຄົມການຄ້າໃນລະດັບແຂວງ. ອີງຕາມດຳລັດ ຂອງນາຍຍົກລັດຖະມົນຕີ ວ່າດ້ວຍການສ້າງຕັ້ງສະມາຄົມ ທີ່ມີຜົນບັງຄັບໃຊ້ທາງດ້ານກົດໝາຍຕໍ່ການຈັດຕັ້ງທີ່ມີໃນປະຈຸບັນ ແລະ ຍັງໄດ້ສືບຕໍ່ສະໜັບສະໜູນການສ້າງຕັ້ງສະມາຄົມໃໝ່ຂຶ້ນຢູ່ເລື້ອຍໆ. ຊຶ່ງກົນໄກດັ່ງກ່າວນັ້ນຈະຮັບປະກັນໃຫ້ຊາວກະສິກອນໄດ້ເຂົ້າເຖິງແນວພັນ, ສິນເຊື່ອ ແລະ ພ້ອມດ້ວຍການສະໜອງ ຜະລິດຕະພັນ ທີ່ມີຄຸນນະພາບດີຢ່າງເປັນປົກກະຕິໃຫ້ພໍ່ຄ້າ. ພ້ອມດຽວກັນນີ້, ສະມາຄົມຜູ້ຜະລິດລະດັບຊາດ ແລະ ນັກທຸລະກິດກະສິກຳຈະເປັນຕົວຊ່ວຍໃຫ້ຜູ້ຜະລິດຊາວລາວ ກາຍມາເປັນຄູ່ແຂ່ງຂັນກັນໃນການຜະ ລິດຢູ່ໃນລະດັບຂົງເຂດພາກພື້ນ ແລະ ພ້ອມທັງອຳນວຍຄວາມສະດວກໃຫ້ການເຂົ້າຫາຕະຫຼາດໂລກໃນອານາຄົດ.

## 3.2 ການພັດທະນາຕະຫຼາດຜະລິດຕະພັນທີ່ໄດ້ປຽບ

ສ ປປ ລາວ ມີທາງໄດ້ປຽບທາງດ້ານການປູກພືດອິນຊີ ເມື່ອສົມທຽບກັບປະເທດເພື່ອນບ້ານ, ເນື່ອງຈາກວ່າປະເທດລາວເຮົາເປັນ ປະເທດທີ່ເຮັດການຜະລິດກະສິກຳອິນຊີເປັນສ່ວນຫຼາຍຢູ່ແລ້ວ. ຖ້າວ່າມີຂະບວນການຢັ້ງຢືນທີ່ດີກໍຈະມີຄວາມເປັນໄປໄດ້ສຳລັບປະເທດລາວເຮົາ, ທີ່ຈະເຂົ້າໄປແຂ່ງຂັນກັບຕະຫຼາດຜະລິດຕະພັນອິນຊີຢູ່ລະດັບພາກພື້ນ ແລະ ສາກົນ. ຜົນສຳເລັດຈາກການທົດລອງຜ່ານມາ, ການປູກກາເຟອິນຊີຢູ່ເຂດພູພຽງບໍລິເວນ ແລະ ການປູກເຂົ້າອິນຊີຢູ່ ເມືອງສັງທອງໄດ້ສະແດງໃຫ້ເຫັນວ່າການພັດທະນາຕ່ອງໂສ້ການຕະຫຼາດຜະລິດຕະພັນອິນຊີແມ່ນມີຄວາມສາມາດເປັນໄປໄດ້. ຊຶ່ງເປັນຄວາມຫວັງທີ່ດີສຳລັບຕົວຊີ້ບອກເຖິງລັກສະນະພູມີປະເທດຂອງຜະລິດຕະພັນກາເຟ ແລະ ເຂົ້າທີ່ຈະນຳຜົນປະໂຫຍດໄປສູ່ຊາວກະສິກອນລາວໃນອານາຄົດ, ທີ່ຈະສາມາດແຂ່ງຂັນດ້ານຜະລິດຕະພັນທີ່ໄດ້ປຽບຢູ່ໃນຕະຫຼາດພາກພື້ນໄດ້. ນອກຈາກນີ້, ການອອກໃບຢັ້ງຢືນປະເພດຕ່າງໆ ທີ່ພົວພັນເຖິງກິດຈະກຳ ການປູກພືດເປັນສິນຄ້າທີ່ນຳໃຊ້ເຕັກນິກນິເວດກະສິກຳ ຫຼື ການຄ້າທີ່ເປັນທຳ, ທີ່ມີຄວາມອາດສາມາດຜັນຂະຫຍາຍໄປໃນອານາຄົດ, ເພື່ອເປັນການເພີ່ມຄວາມສາມາດແຂ່ງຂັນ ໃຫ້ຜະລິດຕະພັນລາວ. ສິ່ງສຳຄັນອີກອັນໜຶ່ງຂອງສິນຄ້າຂອງລາວ, ເຮົາຄວນຈະເພີ່ມການຄ້າຂາຍຜະລິດຕະພັນທີ່ເປັນຂອງລາວແບບດັ້ງເດີມເພື່ອເປັນການເພີ້ມມູນຄ່າຂອງສິນຄ້າໃນແງ່ທາງດ້ານວັດທະນະທຳ ແລະ ເສດຖະກິດ, ຊຶ່ງຈະເປັນຜົນດີໃຫ້ທັງສອງຝ່າຍສຳລັບຊາວກະສິກອນລາວກໍ່ຄືປະເທດຊາດ.

ຄວາມເຂົ້າໃຈ ແລະ ຄວາມຮູ້ທີ່ດີກ່ຽວກັບຕ່ອງໂສ້ການຕະຫຼາດ ແມ່ນຈຳເປັນຕ້ອງໄດ້ຮັບການພັດທະນາ ເພື່ອພັດທະນາວິສະຫະກິດຊົນນະບົດ. ພ້ອມທັງສົ່ງເສີມຄວາມອາດສາມາດຂອງພະນັກງານ ແລະ ກຸ່ມຜູ້ຜະລິດ ໃນການທຳຄວາມເຂົ້າໃຈກ່ຽວກັບຕ່ອງໂສ້ການຕະຫຼາດ ທີ່ເປັນປັດໄຈສຳຄັນໃນການພັດທະນາ. ນອກຈາກນີ້, ກົນໄກການເຊື່ອມໂຍ່ງຊາວກະສິກອນເຂົ້າສູ່ຕະຫຼາດໂດຍຜ່ານການຈັດຕັ້ງກຸ່ມຊາວກະສິກອນ ທີ່ເຂັ້ມແຂງ, ສະຫະກອນ ແລະ ສະມາຄົມຜູ້ຜະລິດຕ່າງໆໃນລະດັບສູງ ກໍຕ້ອງໄດ້ຮັບການຊຸກຍູ້ສົ່ງເສີມເປັນຢ່າງດີ, ຕ້ອງມີການແນະນຳຈະແຈ້ງໃນການຜະລິດເປັນສິນຄ້າ ເພື່ອໃຫ້ມີຄວາມດຸ່ນດ່ຽງກັບການຄ້ຳປະກັນສະບຽງອາຫານ ໃຫ້ທາງແຂວງ ແລະ ທາງເມືອງ, ກ່ອນທີ່ຫຼາຍໆຄອບຄົວຈະສາມາດຄ້ຳປະກັນສະບຽງອາຫານພາຍໃນຄອບຄົວໄດ້. ການນຳເອົາເຕັກນິກ ແລະ ລະບຽບຈາກພາຍນອກເຂົ້າມາໃຊ້ຄວນຈະພິຈາລະນາເຖິງຄວາມຮຽກຮ້ອງຕ້ອງການຕົວຈິງ, ຂໍ້ຈຳກັດ, ຄວາມອາດສາມາດ ແລະ ຄວາມຮູ້ຂອງຊາວກະສິກອນພາຍໃນທ້ອງຖິ່ນກ່ອນ. ເວົ້າລວມແມ່ນເພື່ອເປັນການຕອບສະໜອງໂອກາດ ແລະ ສິ່ງທ້າທາຍທາງດ້ານການຕະຫຼາດ ໃຫ້ແກ່ພາກສ່ວນຜູ້ຜະລິດຂະໜາດນ້ອຍໃຫ້ມີການຜະລິດກະສິກຳແບບຍືນຍົງ ແລະ ມີການຈັດຕັ້ງເປັນກຸ່ມຜູ້ຜະລິດ.

## 3.3 ທາງເລືອກຂອງວິທີການຜະລິດໂດຍການຊຸກຍູ້ສົ່ງເສີມ ແລະ ບໍລິການທາງດ້ານການເງິນ

ນະໂຍບາຍ ຂອງກະຊວງ ກະສິກຳ ແລະ ປ່າໄມ້ ໃນການພັດທະນາ ສູນບໍລິການເຕັກນິກໃນລະດັບກຸ່ມບ້ານ ເປັນໂອກາດທີ່ດີ ເພື່ອປັບປຸງການພົວພັນຊຶ່ງກັນ ແລະ ກັນລະຫ່ວາງຊາວກະສິກອນ ແລະ ພະນັກງານສົ່ງເສີມໃນຂັ້ນບ້ານ. ຊຶ່ງຮູບແບບທີ່ມີຄວາມຍືດຍຸ່ນ ໃນການສົ່ງເສີມການສ້າງຕັ້ງກຸ່ມບ້ານພັດທະນາຂຶ້ນ, ຈາກບົດຮຽນ ແລະ ປະສົບການຂອງຫຼາຍໂຄງການ ພັດທະນາທີ່ໄດ້ຈັດຕັ້ງຜ່ານມາເຫັນໄດ້ວ່າຈຸດສຸມ ຂອງການຈັດຕັ້ງປະຕິບັດ, ຄວນຈະເນັ້ນໃສ່ການສົ່ງເສີມຄວາມສາມາດຂອງພະນັກງານ ເປັນຕົ້ນແມ່ນ (i) ເປີດໂອກາດໃຫ້ເຂົາເຈົ້າ ໄດ້ພົບປະແລກປ່ຽນບົດຮຽນກັບຊາວກະສິກອນ, (ii) ສະເໜີທາງເລືອກໃນການຜະລິດກະສິກຳ ແບບຍືນຍົງ, ການປູກໄມ້ປະສົມປະສານ, ການປູກຜັກປອດສານພິດ ແລະ ອື່ນໆ. (iii) ເພີ້ມສິດອຳນາດແກ່ຊາວກະສິກອນໃນການເຈລະຈາຕໍ່ລອງ ກັບຫົວໜ່ວຍທຸລະກິດ. ນອກຈາກນີ້, ຍັງຈຳເປັນຕ້ອງໄດ້ພັດທະນາຄວາມອາດສາມາດ ໃຫ້ແກ່ພະນັກງານສົ່ງເສີມໃນຂັ້ນເມືອງ ແລະ ຂັ້ນແຂວງຕື່ມອີກ, ເພື່ອໃຫ້ເຂົາເຈົ້າສາ ມາດປະເມີນ ແລະ ມີສ່ວນຮ່ວມໃນການແກ້ໄຂບັນຫາສັນຍາການຜະລິດ ເພື່ອໃຫ້ຄວາມເປັນທຳ ແກ່ທັງສອງຝ່າຍລະຫວ່າງຊາວກະສິກອນກັບຜູ້ຮັບຊື້ຜົນຜະລິດ.

ຈາກບົດຮຽນຂອງຫຼາຍໆໂຄງການ ທີ່ໄດ້ຈັດຕັ້ງປະຕິບັດຜ່ານມາສາມາດຖອດຖອນບົດຮຽນໄດ້ວ່າ: ການສະໜອງສິນເຊື່ອ ແມ່ນເປັນປັດໄຈເສົາຫຼັກໃນການປ່ຽນແປງຮູບແບບການຜະລິດກະສິກຳເປັນສິນຄ້າ. ດັ່ງທີ່ຜ່ານມາ, ຊາວກະສິກອນຜູ້ຜະລິດຂະໜາດນ້ອຍ ຍັງມີຂໍ້ຈຳກັດໃນການເຂົ້າເຖິງສິນເຊື່ອ; ເນື່ອງຈາກວ່າພວກເຂົາເຫຼົ່ານັ້ນບໍ່ໄດ້ຮັບຄຳແນະນຳປຶກສາທາງດ້ານການເງິນ ຫຼື ການນຳໃຊ້ເຕັກນິກໃດໆເລີຍ. ເຖິງຢ່າງໃດກໍ່ຕາມ, ການປັບປຸງການເຂົ້າເຖິງສິນເຊື່ອ ແລະ ຂໍ້ມູນ

ການຕະຫຼາດໃຫ້ຊາວກະສິກອນ ແມ່ນເປັນການລິເລີ່ມຜັກດັນເບື້ອງຕົ້ນ ໃຫ້ແກ່ຊາວກະສິກອນພາຍໃນທ້ອງຖິ່ນ, ຫັນມາທຳການຜະລິດເປັນສິນຄ້າໃຫ້ຫຼາຍຂຶ້ນ. ນອກຈາກນີ້, ຂໍ້ມູນການຕະຫຼາດກໍ່ມີຄວາມຕ້ອງການເປັນຢ່າງຍິ່ງ ເພື່ອສະໜັບສະໜູນໃນການເຈລະຈາຕໍ່ລອງກັນ ລະຫວ່າງກຸ່ມຜູ້ຜະລິດກັບນັກລົງທຶນເພື່ອໃຫ້ແນ່ໃຈວ່າທຸກໆຝ່າຍຈະໄດ້ຮັບຜົນປະໂຫຍດນຳກັນ. ມາເຖິງປະຈຸບັນ, ການລົງທຶນສ່ວນໃຫຍ່ແມ່ນສຸມໃສ່ການພັດທະນາພື້ນຖານໂຄງລ່າງ, ການກໍ່ສ້າງເສັ້ນທາງ ແລະ ໄຟຟ້າ ເພື່ອອຳນວຍຄວາມສະດວກໃນການເຂົ້າເຖິງ ແລະ ເພື່ອເປັນການເພີ່ມຜົນຜະລິດພາຍໃນ. ໃນອານາຄົດ, ການສື່ສານ ແລະ ການສະໜອງຂໍ້ມູນຂ່າວສານ ຈະກາຍມາເປັນປະເດັນຫຼັກ ທີ່ສຳຄັນໃນການເຊື່ອມໂຍງໃຫ້ຜູ້ຜະລິດຂະໜາດນ້ອຍຫັນປ່ຽນມາທຳການຜະລິດ ເປັນຕ່ອງໂສ້ທັງໃນລະດັບພາຍໃນ ແລະ ພາກພື້ນລະດັບໂລກ.

### 3.4 ການສ້າງຄວາມເຂັ້ມແຂງໃຫ້ກຸ່ມຊາວກະສິກອນຜູ້ຜະລິດ

ກຸ່ມຊາວກະສິກອນຜູ້ຜະລິດ, ສະມາຄົມ ແລະ ອົງການຕ່າງໆ ພາຍໃນຊຸມຊົນແມ່ນເປັນອົງປະກອບໜຶ່ງທີ່ສຳຄັນໃຫ້ແກ່ຕ່ອງໂສ້ການຜະລິດ ຊຶ່ງບັນດາກຸ່ມເຫຼົ່ານັ້ນຈະສາມາດສະໜັບສະໜູນໃຫ້ຊາວກະສິກອນຮູ້ຈັກເຈລະຈາຕໍ່ລອງກັບພໍ່ຄ້າ, ປັບປຸງຜົນຜະລິດໂດຍຜ່ານການສົ່ງເສີມນຳໃຊ້ເຕັກນິກ, ສາມາດເຂົ້າເຖິງສິນເຊື່ອພ້ອມທັງຮັບປະກັນໃຫ້ເຂົາເຈົ້າໄດ້ຮັບຜົນຜະລິດທີ່ດີກ່ວາພາຍຫຼັງການເກັບກ່ຽວ. ກະຊວງກະສິກຳ ແລະ ປ່າໄມ້ໄດ້ວາງແຜນການ ເພື່ອເສີມສ້າງຄວາມເຂັ້ມແຂງກຸ່ມຊາວກະສິກອນຜູ້ຜະລິດ ແລະ ຫັນປ່ຽນກຸ່ມດັ່ງກ່າວກາຍມາເປັນສະຫະກອນກະສິກຳ. ຄືດັ່ງດຳລັດສະຫະກອນກະສິກຳທີ່ໄດ້ເຜີຍແຜ່ອອກມາໃນປະຈຸບັນທີ່ໄດ້ສະໜັບສະໜູນໃຫ້ຊາວກະສິກອນມີສິດໃນການລົງທຶນດຳເນີນທຸລະກິດກະສິກຳ ແລະ ເພື່ອໃຫ້ເກີດຜົນປະໂຫຍດຕາມມາພາຍໃນຊຸມຊົນພ້ອມທັງເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດແຫ່ງຊາດ. ເຖິງຢ່າງໃດກໍ່ຕາມ, ຄວາມອາດສາມາດໃນການລົງທຶນດຳເນີນທຸລະກິດກະສິກຳໃນລະດັບຄອບຄົວແມ່ນຍັງຈຳກັດ, ເນື່ອງຈາກ, ການເຮັດທຸລະກິດກະສິກຳຂະໜາດນ້ອຍແມ່ນມີຄວາມສ່ຽງ ແລະ ຜົນສຸດທ້າຍບໍລິສັດຂະໜາດໃຫ່ຍກໍ່ເປັນຜູ້ສົ່ງອອກວັດຖຸດິບຈາກຜົນຜະລິດກະສິກຳໄປຍັງປະເທດເພື່ອນບ້ານ. ເຖິງແມ້ວ່າການສະໜັບສະໜູນຂອງລັດຖະບານຕໍ່ການຜະລິດແບບສະຫະກອນຈະເປັນການຊ່ວຍກຳນົດມູນຄ່າເພີ້ມຂອງຜະລິດຕະພັນກະສິກຳໃນລະດັບທ້ອງຖິ່ນໂດຍຜ່ານຂະບວນການປຸງແຕ່ງ ແລະ ການແປຮູບຕ່າງໆ. ເຖິງຢ່າງໃດກໍ່ຕາມ, ກະສິກຳຂອງ ລາວເຮົາກໍຈະກາຍເປັນທີ່ໜ້າແຂ່ງຂັນຫຼາຍກວ່າໃນລະດັບພາກພື້ນໃນຂະນະທີ່ຢູ່ຂັ້ນທ້ອງຖິ່ນກໍ່ຈະໄດ້ມີການຫຼຸດຜ່ອນຄວາມທຸກຍາກ ແລະ ປັບປຸງຊີວິດການເປັນຢູ່ໃຫ້ດີຂື້ນ.

## 4. ຍຸດທະສາດຂອງການສ້າງຄູ່ຮ່ວມງານນະໂຍບາຍ: ສິ່ງທ້າທາຍໃໝ່ໃນການຄົ້ນຄວ້ານະໂຍບາຍ

ການເປີດປະຕູສູ່ເສດຖະກິດ ແລະ ການປະຕິຮູບທີ່ດິນໄດ້ດັດປັບຢ່າງເລິກເຊິ່ງດ້ວຍວິທີການເຂົ້າເຖິງທ້ອງຖິ່ນ ແລະ ການຈັດການຄຸ້ມຄອງຊັບພະຍາກອນທຳມະຊາດ. ດັ່ງໃນຊ່ວງໄລ

ຍະແຫ່ງການທັບປ່ຽນ, ໂດຍທົ່ວໄປ, ຊາວກະສິກອນພາຍໃນຊຸມຊົນຊົນນະບົດແມ່ນໄດ້ຕົກຢູ່ໃນສະພາບການທີ່ບໍ່ແນ່ນອນ ເນື່ອງຈາກວ່າຂາດປະສົບການພື້ນຖານໃນການຕັດສິນໃຈທີ່ຖືກຕ້ອງ. ຊາວກະສິກອນ ໄດ້ຮັບການສະໜັບສະໜູນແບບຕໍ່ເນື່ອງ ໂດຍບໍ່ມີການສະໜັບສະໜູນເຕັກນິກ ຊຶ່ງບໍ່ເປັນການຄໍ້າປະກັນຄວາມຍືນຍົງ ຂອງລະບົບການຜະລິດແບບໃໝ່ຂອງພວກເຂົາເຈົ້າ. ເພື່ອນຳເອົາຜູ້ຜະລິດຂະໜາດນ້ອຍ ເຂົ້າສູ່ຕະຫຼາດເສດຖະກິດມັນມີຄວາມຈຳເປັນທີ່ຕ້ອງໄດ້ສ້າງສິ່ງແວດລ້ອມອ້ອມຂ້າງທີ່ດີ ເພື່ອການພັດທະນາທີ່ຍືນຍົງທີ່ພົວພັນການມີສ່ວນຮ່ວມຂອງຫຼາຍໆພາກສ່ວນທີ່ກ່ຽວຂ້ອງ ຈາກຫຼາຍຂະແໜງການພາຍໃນທົ່ວສັງຄົມ. ໃນຂະນະທີ່ຍຸດທະສາດການພັດທະນາຊົນນະບົດເຂດພູດອຍ ຂອງກະຊວງກະສິກຳ ແລະ ປ່າໄມ້ທີ່ໄດ້ວາງອອກ ເພື່ອແນໃສ່ພັດທະນາຊາວກະສິກອນຜູ້ຜະລິດຂະໜາດນ້ອຍທີ່ມີຄວາມຈຳເປັນຢ່າງຮີບດ່ວນ ທີ່ຈະຕ້ອງໄດ້ບັນລຸຢ່າງສົມສ່ວນ ຫຼັງຈາກການລົງທຶນຕ່າງປະເທດໂດຍກົງ, ການຊ່ວຍເຫຼືອລ້າ ແລະ ແຜນງານການລົງທຶນຂອງລັດຖະບານແນໃສ່ເພື່ອໃຫ້ກ້າວໄປເຖິງການຜະລິດກະສິກຳແບບຍືນຍົງ, ຊີວະນາໆພັນ ແລະ ການເພີ່ມເນື້ອທີ່ປົກຄຸມປ່າໄມ້. ນອກຈາກນີ້, ຍັງມີບາງການລົງທຶນຕ່າງປະເທດໄດ້ສົ່ງຜົນກະທົບທາງລົບ. ເພາະສະນັ້ນລັດ, ຖະບານຄວນຈະມີການເພີ່ມມາດຕະການຄວບຄຸມ ແລະ ກວດກາ. ແຕ່ວ່ານອກເໜືອຈາກການອອກຄຳສັ່ງ (ໃນທາງການວາງແຜນ) ແລະ ການຄວບຄຸມແລ້ວ (ໃນທາງການບັງຄັບໃຊ້ກົດໝາຍ) ບົດບາດຂອງກະຊວງກະສິກຳ ແລະ ປ່າໄມ້ ກໍ່ຄວນຈະເປັນຜູ້ອຳນວຍຄວາມສະດວກ ແລະ ສ້າງຄູ່ຮ່ວມພັດທະນາໃນຂະບວນການເຈລະຈາຕໍ່ລອງກັນ.

ຄວາມສາມາດໃນການລົງທຶນທາງສິ່ງແວດລ້ອມ ແມ່ນຮຽກຮ້ອງໃຫ້ມີຍຸດທະສາດ ດ້ານຄູ່ຮ່ວມພັດທະນາລະຫວ່າງອົງການລັດຖະບານ (ພາກສ່ວນບໍລິຫານງານ), ພາກສ່ວນທຸລະກິດ (ບໍລິສັດ) ແລະ ອົງການຈັດຕັ້ງພາຍໃນຊຸມຊົນ (ອົງການຈັດຕັ້ງມະຫາຊົນ). ການອຳນວຍຄວາມສະດວກ ແລະ ການຈັດສັນສາຍພົວພັນທັງພາກລັດ ແລະ ເອກກະຊົນແມ່ນລວມເອົາ 3 ປະເພດຂອງການພົວພັນຊຶ່ງກັນ ແລະ ກັນອັນໄດ້ແກ່:

- *ພາກລັດກັບພາກລັດ:* ລັດຖະບານກັບລັດຖະບານ (ຕົວຢ່າງ. ປັບປຸງແນວພັນພືດ ແລະ ແນວພັນສັດ, ການນຳໃຊ້ເຕັກໂນໂລຍີ, ການສ້າງຄວາມອາດສາມາດ).

- *ພາກລັດກັບເອກກະຊົນ:* ລັດຖະບານກັບບໍລິສັດເອກກະຊົນ (ຕົວຢ່າງ. ສັນຍາການເຊົ່າທີ່ດິນ, ການດຶງດູດການລົງທຶນ, ການອອກໃບຢັ້ງຢືນ).

- *ພາກເອກກະຊົນ ແລະ ຜູ້ຜະລິດ:* ບໍລິສັດເອກກະຊົນກັບຜູ້ຜະລິດ (ຕົວຢ່າງ. ສັນຍາການຜະລິດ).

ການສ້າງຄວາມເຂົ້າໃຈ ພ້ອມກັບຂະບວນການເຈລະຈາຕໍ່ລອງ ແລະ ການປະເມີນຜົນທີ່ໄດ້ຮັບແມ່ນເປັນປັດໄຈຫຼັກໃນການຄົ້ນຄວ້າດ້ານນະໂຍບາຍທີ່ແນໃສ່ກຳນົດນະໂຍບາຍທີ່ສອດຄ່ອງ. ຕົວຢ່າງ, ນະໂຍບາຍທີ່ສະໜັບສະໜູນໃຫ້ການເຈລະຈາຕໍ່ລອງ ຫຼື ການວາງລະບຽບການກ່ຽວກັບຂະບວນການເຈລະຈາທີ່ເປັນການທັບປ່ຽນຈາກ

ຄວາມເຂົ້າໃຈ ໃນການແກ້ໄຂບັນຫາຂໍ້ຂັດແຍ່ງຢູ່ໃນລະດັບທ້ອງຖິ່ນ. ເພື່ອເປັນການຊວນເຊື່ອໃຫ້ຂະບວນການເຈລະຈາຕໍ່ລອງເປັນຜົນ ແລະ ມີການແກ້ໄຂນຳກັນລະຫວ່າງສະຖາບັນຄູ່ຮ່ວມພັດທະນາຕ່າງໆ ຊຶ່ງສາມາດຖືໄດ້ວ່າເປັນລະດັບການຄົ້ນຄວ້າດ້ານນະໂຍບາຍໃໝ່.

ໃນການພັດທະນາແຜນງານຍຸດທະສາດຫຼຸດຜ່ອນຄວາມທຸກຍາກແຫ່ງຊາດ ທີ່ທາງລັດຖະບານໄດ້ກຳນົດອອກ (2004) ປະກອບດ້ວຍ 4 ຂະແໜງການໃຫຍ່ເຊັ່ນ: ຂະແໜງການກະສິກຳ ແລະ ປ່າໄມ້, ການສຶກສາ, ສາທາລະນະສຸກ ແລະ ການກໍ່ສ້າງພື້ນຖານໂຄງລ່າງ. ຊຶ່ງແຜນງານຍຸດທະສາດຫຼຸດຜ່ອນຄວາມທຸກຍາກແຫ່ງຊາດແມ່ນໝາກຜົນຂອງຂະບວນການທີ່ກວ້າງຂວາງທີ່ໄດ້ຮວບຮວມເອົາຄູ່ຮ່ວມພັດທະນາ ຈາກຫຼາຍພາກສ່ວນທີ່ກ່ຽວຂ້ອງ ຊຶ່ງໄດ້ລິເລີ່ມຈັດຕັ້ງປະຕິບັດມາຕັ້ງແຕ່ປີ 1996 ໃນເວລາທີ່ກອງປະຊຸມໃຫຍ່ຄັ້ງທີ VI ຂອງພັກປະຊາຊົນປະຕິບັດລາວ ໂດຍໄດ້ກຳນົດເປົ້າໝາຍການພັດທະນາໃນໄລຍະຍາວນານ ເພື່ອຫຼຸດພົ້ນອອກຈາກເປັນປະເທດດ້ອຍພັດທະນາໃຫ້ໄດ້ໃນປີ 2020. ອີງການຈັດຕັ້ງຫຼາຍຝ່າຍຕ່າງກໍ່ໄດ້ໃຫ້ການສະໜັບສະໜູນຢ່າງກ້ວາງຂວາງແກ່ລັດຖະບານລາວ ໃນການກຳນົດລະດັບແຜນງານຍຸດທະສາດຫຼຸດຜ່ອນຄວາມທຸກຍາກແຫ່ງຊາດ ເພື່ອໃຫ້ບັນລຸເປົ້າໝາຍການພັດທະນາສະຫັດສະວັດໃໝ່ (MDG). ຕັ້ງແຕ່ນັ້ນມາ, ບັນດາໂຄງການຜູ້ໃຫ້ທຶນໄດ້ຊ່ວຍລັດຖະບານໃນການຈັດຕັ້ງປະຕິບັດແຜນການ ແລະ ການປະເມີນຜົນຄືບໜ້າເພື່ອກ້າວໄປສູ່ການບັນລຸເປົ້າໝາຍຂອງແຜນຍຸດທະສາດ ຫຼຸດຜ່ອນຄວາມທຸກຍາກແຫ່ງຊາດ. ໃນປີ 2003, ອີງຕາມການຖະແຫຼງການຢູ່ກຸງໂລມ (Rome Declaration), ໄດ້ມີຫຼາຍພາກສ່ວນຜູ້ໃຫ້ທຶນຕ່າງກໍ່ເຫັນດີທີ່ຈະປະສານງານຮ່ວມກັນ ແລະ ເຮັດໃຫ້ກົມກຽວກັນບັນດາກິດຈະກຳດ້ານການພັດທະນາຂອງພວກຕົນ. ຊຶ່ງຄວາມພະຍາຍາມດັ່ງກ່າວນັ້ນ ແມ່ນໄດ້ຮັບການຮັບຮອງຢ່າງເປັນທາງການຈາກປະຊາຄົມນາໆຊາດ ຢູ່ໃນຖະແຫຼງການປາຣີໃນປີ 2005 (Paris Declaration) ແລະ ຢູ່ໃນຖະແຫຼງການວຽງຈັນ (Vientiane Declaration) ໃນປີ 2007 ກ່ຽວກັບປະສິດຕິຜົນໃນການສ້າງຄວາມເຂັ້ມແຂງທາງດ້ານການຄຸ້ມຄອງທີ່ໂປ່ງໃສ, ປັບປຸງຮູບແບບການພັດທະນາ ແລະ ປັບປຸງຜົນທີ່ໄດ້ຮັບຈາກການພັດທະນາ. ໃນສະພາບເງື່ອນໄຂ ດັ່ງກ່າວນີ້, ລັດຖະບານແຫ່ງ ສປປລາວ ແລະ ອີກຫຼາຍກວ່າ 20 ຜູ້ໃຫ້ທຶນໄດ້ຈັດຕັ້ງກຸ່ມເຮັດວຽກກ່ຽວກັບການພັດທະນາເຂດພູດອຍເພື່ອເປັນການລິເລີ່ມສ້າງຄູ່ສົນທະນາດ້ານນະໂຍບາຍເພື່ອແກ້ໄຂບັນຫາການປ່ຽນແປງທີ່ເກີດຂຶ້ນຢູ່ບັນດາແຂວງພາກເໜືອຂອງລາວ. ສະຖາບັນຄົ້ນຄວ້າດ້ານນະໂຍບາຍໄດ້ມີການເຂົ້າຮ່ວມຢ່າງຕັ້ງໜ້າໃນຂະບວນການລວມໝູ່ ເພື່ອໃຫ້ການແນະນຳ ແລະ ຈັດເອົາລາຍການປຶກສາສົນທະນານີ້ເຂົ້າໃນຕາຕະລາງເຮັດວຽກຂອງພວກຕົນ.

ການສ້າງຄວາມອາດສາມາດທາງດ້ານສະຖາບັນທີ່ກ່ຽວຂ້ອງກໍ່ເປັນອີກຂະແໜງການໜຶ່ງທີ່ສຳຄັນໃນແຜນງານຍຸດທະສາດຫຼຸດຜ່ອນຄວາມທຸກຍາກທີ່ມີຈຸດປະສົງເພື່ອປັບປຸງຂະບວນການສ້າງຮ່າງນະໂຍບາຍຂອງລັດຖະບານ, ການປະສານງານ ແລະ ການຕິດຕາມປະເມີນຜົນ ຊຶ່ງກະຊວງແຜນການ ແລະ ການລົງທຶນທີ່ມີໜ້າທີ່ຮັບຜິດຊອບໃນຂະບວນການປະສານງານດັ່ງກ່າວ. ສຳລັບສູນສະຖິຕິແຫ່ງຊາດ ກໍ່ເປັນສູນໜຶ່ງທີ່ຂຶ້ນກັບກະຊວງແຜນການ ແລະ ການ

ລົງທຶນ ທີ່ມີການປັບປຸງ ແລະ ສ້າງຄວາມເຂັ້ມແຂງດ້ານການຄຸ້ມຄອງຖານຂໍ້ມູນແຫ່ງຊາດ ທາງດ້ານເສດຖະກິດ ແລະ ສັງຄົມ ທີ່ເປັນຕົວຊີ້ບອກຂອງການຄຸ້ມຄອງທີ່ໂປ່ງໃສ, ການປະເມີນຜົນກະທົບ ແລະ ຜົນຄືບໜ້າທີ່ນຳໄປສູ່ຄວາມສອດຄ່ອງກັບຂໍ້ຕົກລົງຂອງສາກົນ. ນອກຈາກນີ້, ອົງການທີ່ພົວພັນເຖິງການສ້າງນະໂຍບາຍໄດ້ແກ່ສະຖາບັນ ຄົ້ນຄວ້າ ເສດຖະກິດ ແຫ່ງຊາດ (ສ້າງຕັ້ງຂື້ນໃນປີ 1997 ພາຍໃຕ້ຄະນະກຳມະການຮ່ວມມື ແລະ ການວາງແຜນ) ຊຶ່ງເປັນສະຖາບັນທີ່ໄດ້ຈັດຕັ້ງປະຕິບັດກ່ຽວກັບການປະເມີນຜົນທາງດ້ານເສດຖະກິດ, ການຄົ້ນຄວ້າ, ວິໄຈເຖິງນະໂຍບາຍສະໜັບສະໜູນຕ່າງໆ ແລະ ລວມໄປເຖິງຂະບວນການວາງແຜນ. ເຊັ່ນດຽວກັນກັບສູນຄົ້ນຄວ້ານະໂຍບາຍກະສິກຳ ແລະ ປ່າໄມ້ (ສ້າງຕັ້ງຂື້ນໃນປີ 2007) ພາຍໃຕ້ການຊີ້ນຳຈາກສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ ແຫ່ງຊາດ (ສ້າງຕັ້ງຂື້ນໃນປີ 1999) ທີ່ໄດ້ຈັດຕັ້ງປະຕິບັດວຽກງານສຶກສາຄົ້ນຄວ້າກ່ຽວກັບນະໂຍບາຍ ແລະ ວິໄຈກ່ຽວກັບການນະໂຍບາຍທີ່ທາງກະຊວງກະສິກຳ ແລະ ປ່າໄມ້ ໄດ້ວາງອອກ. ນອກຈາກນີ້, ອົງການຄຸ້ມຄອງທີ່ດິນແຫ່ງຊາດ (ສ້າງຕັ້ງຂື້ນໃນປີ 2007) ແລະ ອົງການຄຸ້ມຄອງຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ (ສ້າງຕັ້ງຂື້ນໃນປີ 2007) ກໍ່ເປັນອົງກອນຫຼັກທີ່ມີໜ້າທີ່ສະໜອງນະໂຍບາຍກ່ຽວກັບທີ່ດິນ, ນໍ້າ ແລະ ສິ່ງແວດລ້ອມໃຫ້ແກ່ລັດຖະບານ.

ເນື່ອງຈາກອົງກອນຂອງລັດຖະບານເຫຼົ່ານີ້ມີຂອບເຂດຮັບຜິດຊອບທີ່ກວ້າງຂວາງ, ມີພາລະໜ້າທີ່ອັນສຳຄັນ ແລະ ຈຳເປັນທີ່ສຸດໃນການປະສານງານດ້ານການຄົ້ນຄວ້າ ແລະ ການວິໄຈນະໂຍບາຍ. ເຖິງຢ່າງໃດກໍ່ຕາມ, ໃນຄະນະທີ່ການປະສານງານດຳເນີນໄປໄດ້ດີ ແມ່ນໄດ້ລະບຸໄວ້ໃນເຈ້ຍໃນສໍເທົ່ານັ້ນ ແຕ່ໃນທາງການຈັດຕັ້ງປະຕິບັດຕົວຈິງແມ່ນໄດ້ປະເຊີນກັບບັນຫາ ແລະ ອຸປະສັກຫຼາຍຢ່າງຍ້ອນວ່າ: (i) ຂັ້ນຕອນທີ່ຈຳເປັນຂອງການຮຽນຮູ້ອົງກອນຂອງສະຖາບັນທີ່ຖືກສ້າງຕັ້ງຂື້ນໃໝ່ ແລະ ການສ້າງຄວາມອາດສາມາດໃຫ້ແກ່ພະນັກງານທີ່ຖືກສັບຊ້ອນໃໝ່, (ii) ການເພີ່ມຈຳນວນຄູ່ເຈລະຈາຕໍ່ລອງ, ໂດຍການສ້າງສາຍພົວພັນທີ່ເປັນທາງການ - ການຮ່ວມມືກັນໃນການສ້າງຂໍ້ຕົກລົງ ເພື່ອສ້າງຕັ້ງ ແລະ ເພື່ອຮັກສາ ແລະ (iii) ທ່າອ່ຽງໂດຍທຳມະຊາດເພື່ອສະສົມຄວາມຮູ້, ແບ່ງຂະແໜງການປົກຄອງ ແລະ ລະດັບການຍາດແຍ່ງເອົາການສະໜັບສະໜູນຈາກຜູ້ໃຫ້ທຶນ ຫຼື ເພື່ອຂະຫຍາຍຂອບເຂດອຳນາດ. ເຖິງຈະມີເຈດຕະນາດີກໍ່ຕາມການເພີ່ມທະວີຄູນຂອງນະໂຍບາຍ ໃນໄລຍະໃໝ່ໆນີ້ທີ່ພົວພັນເຖິງສະຖາບັນອາດສາມາດພາໃຫ້ມີການເພີ່ມມູນຄ່າໃຊ້ຈ່າຍຢ່າງຫຼວງຫຼາຍ ໃນການສ້າງຕັ້ງ ແລະ ຫຼໍ່ລ້ຽງການສ້າງຄູ່ຮ່ວມພັດທະນາທີ່ມີຄວາມໂປ່ງໃສ ແລະ ມີຄວາມດຸ່ນດ່ຽງກັນລະຫວ່າງພາກລັດ ແລະ ເອກະຊົນ.

ການກະຈາຍອຳນາດທາງດ້ານການເມືອງ ແລະ ກິຈັກການປົກຄອງ ໃນ ສປປ ລາວ ກໍ່ເປັນການເພີ່ມພາລະໜ້າທີ່ທີ່ມີຄວາມສັບສົນ, ດັ່ງຫົວໜ່ວຍການວາງແຜນຍຸດທະສາດ ແມ່ນໜ້າທີ່ຂອງທາງຂັ້ນແຂວງ ແຕ່ໃນຂະນະທີ່ການປົກຄອງຂັ້ນເມືອງເປັນທັງສອງຫົວໜ່ວຍງານລະຫວ່າງວຽກງານການວາງແຜນ ແລະ ຈັດຕັ້ງປະຕິບັດ. ແຕ່ສຳລັບຂັ້ນບ້ານແມ່ນເປັນພຽງແຕ່ຫົວໜ່ວຍຈັດຕັ້ງປະຕິບັດເທົ່ານັ້ນ. ຊຶ່ງບັນດາຫົວໜ່ວຍບ້ານດັ່ງກ່າວນີ້ໄດ້ຖືກປະລະໃຫ້ມີການເຄື່ອນໄຫວຢ່າງກວ້າງຂວາງໂດຍດັດປັບໃຫ້ເຂົ້າກັບສະພາບເງື່ອນ

ໄຂທ້ອງຖິ່ນ ທີ່ຂຶ້ນກັບລະດັບໄລຍະທາງໃກ້ ຫຼື ໄກຕໍ່ກັບສູນກາງການປົກຄອງ. ໃນໄລຍະຊຸມປີຜ່ານມານີ້, ກຸ່ມບ້ານພັດທະນາໄດ້ຮັບການສ້າງຕັ້ງຂຶ້ນ ຊຶ່ງເປັນລະດັບການປົກຄອງຢູ່ລະຫວ່າງຂັ້ນເມືອງ ແລະ ຂັ້ນບ້ານ. ເຖິງຢ່າງໃດກໍ່ຕາມ, ຂະບວນການຕັດສິນໃຈຂອງອຳນາດການປົກຄອງ ແລະ ການມອບສິດອຳນາດລະຫວ່າງຂັ້ນປົກຄອງຕ່າງໆ ແມ່ນບໍ່ໄດ້ກຳນົດຢ່າງເປັນລະບົບ, ດັ່ງການຊີ້ນຳຂອງລັດຖະບານໃນປີ 2000 ທີ່ໄດ້ເວົ້າເຖິງການພົວພັນລະຫວ່າງຂັ້ນສູນກາງກັບຂັ້ນທ້ອງຖິ່ນຊຶ່ງເປັນການ ເຮັດໃຫ້ອຳນາດການປົກຄອງທ້ອງຖິ່ນມີຄວາມຍືດຍຸ່ນ ເພື່ອສ້າງລາຍຮັບຈາກຊັບພະຍາກອນທ້ອງຖິ່ນ ທີ່ລັດຖະບານສ່ວນກາງບໍ່ສາມາດຈະສະໜອງໃຫ້ໄດ້ ແລະ ເພື່ອດັດປັບນະໂຍບາຍຂອງພວກເຂົາໃຫ້ເຂົ້າກັບສະພາບຂອງທ້ອງຖິ່ນ. ເຖິງຢ່າງໃດກໍ່ຕາມ, ມັນຍັງເປັນການສ້າງຄວາມສັບສົນ ດ້ວຍການລ່ວງລ້ຳອຳນາດໜ້າທີ່, ໃນທາງກົງກັນຂ້າມກັບຄວາມຕ້ອງການຂອງຫຼາຍອົງກອນທີ່ແຕກຕ່າງກັນ ແລະ ເກີດມີບັນຫາຂັດ ແຍ່ງກັນລະຫວ່າງຜູ້ສ້າງນະ ໂຍບາຍກັບຜູ້ວາງແຜນໃນຫຼາຍລະດັບທີ່ ແຕກຕ່າງກັນ. ຖ້າຫາກວ່າການສອດ ແຊງທາງດ້ານນະ ໂຍບາຍບໍ່ໄດ້ປະສານກັນ ແລະ ຂໍ້ມູນຂ່າວສານບໍ່ໄດ້ເຜີຍແຜ່ໃຫ້ກັນຊາບຢ່າງທັນກັບເວລາ. ຕົວຢ່າງ, ອຳນາດການປົກຄອງພາຍໃນທ້ອງຖິ່ນໄດ້ຕີຄວາມໝາຍຂອງການໝູນໃຊ້ນະໂຍບາຍແຫ່ງຊາດໃນທາງທີ່ບໍ່ສອດຄ່ອງກັນ, ດັ່ງໃນກໍລະນີການອອກໃບອະນຸຍາດລົງທຶນ ຫຼື ເຂົ້າເຖິງທີ່ດິນ ແລະ ເຂົ້າເຖິງຊັບພະຍາກອນທຳມະຊາດອື່ນໆຂອງບໍລິສັດເອກກະຊົນ. ຊຶ່ງໃນບັນຫາດັ່ງກ່າວນີ້, ລັດຖະບານໃນຂັ້ນສູນກາງຕ້ອງໄດ້ວາງແຜນ ແລະ ຕັດສິນໃຈສ້າງຮ່າງນະໂຍບາຍ ໂດຍຜູກມັດກັບຫຼາຍໆກຸ່ມພາກສ່ວນທີ່ກ່ຽວຂ້ອງທີ່ມີການປະກອບສ່ວນ ແລະ ປັບປຸງແກ້ໄຂບັນຫາ, ຂໍ້ຂັດແຍ່ງ ແລະ ສ້າງກົນໄກອັນໃໝ່ ເພື່ອສາມາດກະຈາຍຄວາມຮັບຜິດຊອບໃຫ້ແກ່ອຳນາດການປົກຄອງພາຍໃນທ້ອງຖິ່ນສາມາດບໍລິຫານງານກັນໄດ້.

ໃນໄລຍະຊຸມປີຜ່ານມານີ້, ໄດ້ເກີດມີສິ່ງທ້າທາຍຫຼາຍຢ່າງຕໍ່ກັບວຽກງານການວາງແຜນ ແລະ ການຈັດຕັ້ງປະຕິບັດ ແນວຄິດລິເລີ່ມກ່ຽວກັບບັນຫາສິ່ງແວດລ້ອມໂລກເປັນຕົ້ນແມ່ນກົນໄກຂອງສະພາບການປ່ຽນແປງດິນຟ້າອາກາດ ທີ່ຮູ້ກັນໃນນາມການຫຼຸດຜ່ອນການປ່ອຍທາດອາຍພິດເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້ (REDD). ການຄົ້ນຄວ້າ ແລະ ການໂຕ້ແຍ້ງກັນ ແມ່ນຍັງໄດ້ສືບຕໍ່ດຳເນີນໄປໃນຫຼາຍລະດັບ. ເນື່ອງຈາກວ່າ ສປປ ລາວ ຍັງມີຄວາມອຸດົມສົມບູນດ້ານຊັບພະຍາກອນປ່າໄມ້. ດັ່ງນັ້ນ, ຈຶ່ງໄດ້ຖືກຄັດເລືອກ ໂດຍອົງກອນຜູ້ໃຫ້ທຶນ ແລະ ອົງການຈັດຕັ້ງສາກົນເພື່ອຈະ ທົດລອງຈັດຕັ້ງປະຕິບັດກົນໄກ REDD ກ່ອນທີ່ຈະບັນຈຸເຂົ້າໃນໃນສົນທິສັນຍາກຽວໂຕ (Kyoto Protocol). ເພາະສະນັ້ນ, ທຸກໆພາກສ່ວນຈຳເປັນຕ້ອງໄດ້ເຂົ້າຮ່ວມໃນຂະບວນການຮຽນຮູ້ເຖິງແມ້ວ່າຜົນໄດ້ຮັບຈະມີຄວາມບໍ່ແນ່ນອນສູງ. ແຕ່ສິ່ງທີ່ແນ່ນອນນັ້ນ ແມ່ນຜົນສຳເລັດຂອງຄວາມພະຍາຍາມຂື້ນຂອງພາກສ່ວນທີ່ກ່ຽວຂ້ອງໃນການເຂົ້າຮ່ວມສົນທະນາທີ່ເປັນປະໂຫຍດທາງດ້ານນະໂຍບາຍ.

## 5. ສະຫຼຸບ

ວຽກງານຂະແໜງກະສິກຳຂອງລາວເຮົາ ແມ່ນໄດ້ມີການປ່ຽນແປງ ໃນໄລຍະທົດສະວັດທີ່ຜ່ານມາ ເນື່ອງຈາກຂະແໜງກະສິກຳ ແມ່ນຍັງຄົງເປັນເສົາຫຼັກຂອງເສດຖະກິດແຫ່ງຊາດ. ເຖິງຢ່າງໃດກໍ່ຕາມບັນດານະໂຍບາຍລັດຖະບານ (ນະໂຍບາຍການເປີດປະຕູເສດຖະກິດ, ການເຕົ້າໂຮມບ້ານ, ການວາງແຜນນຳໃຊ້ທີ່ດິນ ແລະ ການມອບດິນມອບປ່າ, ອື່ນໆ) ແລະ ລວມໄປເຖິງນະໂຍບາຍຊຸກຍູ້ສົ່ງເສີມການລົງທຶນຈາກຕ່າງປະເທດ (ທ່າອ່ຽງການຂະຫຍາຍພື້ນທີ່ປູກຢາງພາລາ, ສາລີ, ການສ້າງເຂື່ອນໄຟຟ້າ ແລະ ກິດຈະກຳທາງດ້ານບໍ່ແຮ່) ໄດ້ສົ່ງຜົນກະທົບໃນໄລຍະຍາວຕໍ່ທັດສະນິຍະພາບພື້ນທີ່ ແລະ ຊີວິດການເປັນຢູ່ຂອງປະຊາຊົນພາຍໃນທ້ອງຖິ່ນຊົນນະບົດໃນ ສປປ ລາວ ຫຼາຍກວ່າໂຄງການສຶກສາຄົ້ນຄວ້າເພື່ອພັດທະນາ. ແຕ່ກໍ່ບໍ່ໄດ້ໝາຍຄວາມວ່າໂຄງການຕ່າງໆເຫຼົ່ານັ້ນຈະບໍ່ມີຜົນປະໂຫຍດ ຫຼື ບໍ່ມີຄວາມຈຳເປັນຫຍັງເລີຍບໍ່? ຕອບໄດ້ເລີຍວ່າບໍ່ແນ່ນອນເນື່ອງຈາກວ່າຜ່ານໂຄງການຕົວແບບກິດຈະກຳບູລິມະສິດ ແລະ ການທົດລອງ ຊຶ່ງໂຄງການເຫຼົ່ານັ້ນໄດ້ສະໜັບສະໜູນການອອກແບບ ແລະ ການຈັດຕັ້ງປະຕິບັດນະໂຍບາຍພ້ອມທັງການອອກລະບຽບຄຸ້ມຄອງພາຍໃຕ້ຂົງເຂດວຽກງານທີ່ຈະເປັນໂອກາດໃຫ້ເກີດຜົນດີໃນຂະນະທີ່ມີການບັນເທົາຜົນກະທົບທາງລົບ. ຄຳຖາມຫຼັກໃນທີ່ນີ້ແມ່ນຈະເຮັດແນວໃດເພື່ອໃຫ້ການປະສານງານໄປໄດ້ດີ ແລະ ການຮອບຮວມເອົາຜົນຈາກການສຶກສາຄົ້ນຄວ້າ, ໃຫ້ສອດຄ່ອງ ແລະ ປະກອບເຂົ້າໃນວຽກງານການສ້າງນະໂຍບາຍ. ຈາກປະສົບການຕົວຈິງທີ່ໄດ້ຈາກການສຶກສາຄົ້ນຄວ້າຄືດັ່ງຄຳຖາມທີ່ວ່າຈະເຮັດຫຍັງ, ໃນເວລາໃດ, ຢູ່ໃສ ແລະ ດ້ວຍເຫດໃດທີ່ມີຄວາມຕ້ອງການການອອກແບບນະໂຍບາຍທີ່ສອດຄ່ອງ ເພື່ອສະໜັບສະໜູນໃຫ້ແກ່ການຜັນຂະຫຍາຍບົດຮຽນທີ່ໄດ້ຮັບມາຈັດຕັ້ງປະຕິບັດໃຫ້ປະສົບຜົນສຳເລັດ.

ໄດ້ມີຫຼາຍໆໂຄງການທີ່ໄດ້ອຸທິດຄວາມພະຍາຍາມ ໃນການສະໜອງຄວາມຮູ້ ທີ່ຈະສາມາດນຳມາໝູນໃຊ້ໃຫ້ແກ້ຜູ້ສ້າງນະໂຍບາຍ, ແຕ່ກໍ່ມີພຽງຈຳນວນໜ້ອຍດຽວທີ່ສາມາດໄປເຖິງເປົ້າໝາຍ. ເຫດຜົນດຽວຍ້ອນວ່າພວກເຂົາບໍ່ໄດ້ກຳນົດແຕ່ຫົວທີກ່ຽວກັບຜູ້ສ້າງນະໂຍບາຍທີ່ພວກເຂົາຕ້ອງການຢາກສົ່ງຂໍ້ມູນໃຫ້ ຫຼື ບໍ່ໄດ້ສົ່ງຂໍ້ມູນຂອງພວກເຂົາໃຫ້ກຸ່ມເປົ້າໝາຍທີ່ມີທ່າແຮງ. ການກຳນົດແນວທາງຜົນກະທົບຄວນມີການດັດປັບໃຫ້ເຂົ້າກັບຄວາມສາມາດ ຂອງຜູ້ທີ່ຈະໄດ້ຮັບ ຫຼື ສະຖາບັນ. ໃນຄະນະທີ່ມີການສ້າງຄວາມສາມາດດັ່ງກ່າວ, ການສົນທະນາດ້ານນະໂຍບາຍໃນທາງສ້າງສັນແມ່ນມີຄວາມຈຳເປັນທີ່ຄວນໃຫ້ມີການເຂົ້າຮ່ວມຂອງຫຼາຍໆຄູ່ຮ່ວມພັດທະນາ ແລະ ຈັດຂຶ້ນໃນຫຼາຍໆຂະໜາດ. ຂະບວນການດັ່ງກ່າວ ຮຽກຮ້ອງໃຫ້ມີຄວາມຮູ້ທີ່ກ່ຽວຂ້ອງ ເພື່ອເຜີຍແຜ່ແລກປ່ຽນຄວາມຮູ້ນຳກັນພາຍໃນຄູ່ຮ່ວມພັດທະນາດ້ວຍກັນພ້ອມທັງການປະສານງານເປັນຢ່າງດີລະຫ່ວາງຊຸມຊົນ, ຜູ້ຕັດສິນໃຈ ແລະ ຄູ່ຮ່ວມງານໃນການພັດທະນາທີ່ລວມທັງຂະແໜງການເອກະຊົນ.

ຕາຕະລາງ 1: ເປົ້າໝາຍ ແລະ ຜົນໄດ້ຮັບໂດຍລວມ ຂອງກະຊວງກະສິກຳ ແລະ ປ່າໄມ້

| ເປົ້າໝາຍ | ແຜນປີ 2006-2010 | ຜົນໄດ້ຮັບປີ 2010 | ແຜນຕໍ່ໜ້າ 2011-2015 |
|---|---|---|---|
| 1: ການຄ້ຳປະກັນສະບຽງອາຫານ ແລະ ການປັບປຸງຊີວິດການເປັນຢູ່ | ໃຫ້ບັນລຸ 3,4% ຂອງຂະແໜງການ ກວມເອົາ 3,3 ລ້ານໂຕນ ຂອງຜົນຜະລິດເຂົ້າ, ເພີ່ມການຕອບສະໜອງຄວາມຮຽກຮ້ອງຕ້ອງການດ້ານສະບຽງອາຫານ ໃນ 47 ເມືອງທຸກຍາກ ໃຫ້ບັນລຸ 350 ກິໂລ/ຫົວຄົນ/ປີ ແລະ ເພີ່ມຜົນຜະລິດຊີ້ນ, ໄຂ່, ປາ ແລະ ນົມສົດ ຈາກ 5% ໂດຍສະເລ່ຍແລ້ວຄວາມຕ້ອງການບໍລິໂພກ 40-50 ກິໂລ/ຫົວຄົນ/ປີ. | (i) ຜົນຜະລິດເຂົ້າເພີ່ມຂຶ້ນປະມານ 30% ຈາກປີ 2006-2010 ຊຶ່ງມີເຂົ້າເຫຼືອກິນ 3-400.000 ໂຕນ ທີ່ສາມາດເພີ່ມໃຫ້ການຄ້າຊາຍແດນ.<br>(ii) ມີແຫຼ່ງອາຫານທີ່ໃຫ້ໂປຕີນ (ຊີ້ນ, ປາ ແລະ ໄຂ່) ເທົ່າກັບ 45 ກິໂລ/ຫົວຄົນ/ປີ.<br>(iii) ຜົນຜະລິດເຂົ້າທີ່ສຳຮອງໄວ້ ແມ່ນຍັງມີຈຳນວນຈຳກັດ. | (i) ໃຫ້ບັນລຸ 4% ໃນການຂະຫຍາຍຕົວຂອງຂະແໜງການຄ້ຳປະກັນສະບຽງອາຫານ ແລະ ສຳຮອງຜົນຜະລິດເຂົ້າໃຫ້ໄດ້ 350 ກິໂລ/ຫົວຄົນ/ປີ ແລະ ໃຫ້ໄດ້ເປັນພະລັງງານ 50-60 ກິໂລ/ຫົວຄົນ/ປີ.<br>(ii) ຫຼຸດຜ່ອນບັນຫາການຂາດເຂົ້າກິນໃນລາວ ໃຫ້ບັນລຸໃນປີ 2015.<br>(iii) ເກັບສຳຮອງຜົນຜະລິດເຂົ້າໃຫ້ໄດ້ 60.000-120.000 ໂຕນ ແລະ ເກັບແນວພັນໃຫ້ໄດ້ຫຼາຍກວ່າ 10.000 ໂຕນ. |
| 2: ເພີ່ມການຜະລິດກະສິກຳເປັນສິນຄ້າ | ຕອບສະໜອງວັດຖຸດິບ ແລະ ຜະລິດຕະພັນກະສິກຳ ແລະ ປ່າໄມ້ ເພື່ອປ້ອນອຸດສະຫະກຳພາຍໃນ. ເພີ່ມຈຳນວນການສົ່ງອອກຜະລິດຕະພັນກະສິກຳ ແລະ ປ່າໄມ້ໃຫ້ໄດ້ 30% ຂອງຜະລິດຕະພັນສົ່ງອອກທັງໝົດ (ປະມານ 1 ພັນລ້ານໂດລາ) ໃນປີ 2010. | (i) ຜົນຜະລິດເປັນສິນຄ້າເພີ່ມຂຶ້ນ ແລະ ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການໃນທ້ອງຖິ່ນໄດ້ ໂດຍການປັບປຸງການເຂົ້າເຖິງຕະຫຼາດທັງໃນຂົງເຂດ ແລະ ພາກພື້ນ.<br>(ii) ມູນຄ່າຂອງຜົນຜະລິດຕາມຄວາມຮຽກຮ້ອງຕ້ອງການພາຍໃນທ້ອງຖິ່ນເພີ່ມຂຶ້ນເຖິງ 1,2 ພັນລ້ານໂດລາ ກວມ 65% ຂອງຜົນຜະລິດເຂົ້າ ແລະ ຫຼາຍກວ່າ 1,2 ພັນລ້ານໂດລາ ສຳລັບການຄ້າຊາຍແດນໃນຂົງເຂດ ແລະ ຕະຫຼາດພາກພື້ນ.<br>(iii) ການລົງທຶນຕ່າງປະເທດໃນຂະແໜງກະສິກຳ (ຫຼາຍກວ່າ 1,5 ພັນລ້ານໂດລາ) ທີ່ກວມເນື້ອທີ່ຫຼາຍກວ່າ 400.000 ເຮັກຕາ ຂອງການປູກໄມ້ເນື້ອອ່ອນ, ມັນຕົ້ນ, ອ້ອຍ ແລະ ອື່ນໆ. | (i) ສົ່ງເສີມ ແລະ ຈັດຕັ້ງປະຕິບັດຕ່ອງໂສ້ມູນຄ່າ ໃນເຂດພູດອຍ.<br>(ii) ສ້າງໂອກາດຈາກການເຂົ້າເປັນສະມາຊິກໃໝ່ໃນສະມາຄົມອາຊຽນ ເພື່ອໃຫ້ເປັນເສົາຫຼັກແກ່ການພັດທະນາເສດຖະກິດ-ສັງຄົມ. |

| | | | |
|---|---|---|---|
| 3: ການຜະລິດແບບຍືນຍົງເພື່ອໃຫ້ກ້າວໄປເຖິງການຢຸດຕິການຖາງປ່າເຮັດໄຮ່ | ລົບລ້າງການຖາງປ່າເຮັດໄຮ່ ຊຶ່ງເປັນຍຸດທະສາດໜຶ່ງໃນການຫຼຸດຜ່ອນຄວາມທຸກຍາກ ແລະ ປົກປັກຮັກສາສິ່ງແວດລ້ອມພາຍໃນ 47 ເມືອງທຸກຍາກ. | (i) ເນື້ອທີ່ທີ່ຖືກທຳລາຍຈາກການຖາງປ່າເຮັດໄຮ່ໄດ້ຫຼຸດລົງ ຊຶ່ງກວມເອົາ 68.000 ເຮັກຕາ ຂອງເນື້ອທີ່ຖາງປ່າເຮັດໄຮ່.<br>(ii) ທາງເລືອກຂອງລະບົບການຜະລິດໄດ້ຂະ ຫຍາຍໃນທາງກວ້າງເຊັ່ນ ເຂົ້າໄຮ່ ປະສົມກັບການເຮັດສວນ, ການປູກຫຍ້າ ລ້ຽງງົວ, ການປູກໄມ້, ເຮັດໜອງປາ, ເກັບເຄື່ອງປ່າຂອງດົງ ແລະ ການເຮັດການຜະລິດກະສິກຳແບບກະເສດສຸມ. | (i) ສ້າງໂອກາດໃນການຈ້າງງານ ໃຫ້ປະຊາຊົນໃນເຂດພູດອຍ ແລະ ຊົນນະບົດທຸກຍາກ ທີ່ຢູ່ຫ່າງໄກສອກຫຼີກ.<br>(ii) ລົບລ້າງການຖາງປ່າເຮັດໄຮ່ໃຫ້ໄດ້ຢ່າງຊິ້ນເຊີງ. |
| 4: ການຄຸ້ມຄອງປ່າໄມ້ແບບຍືນຍົງ | ເພີ່ມເນື້ອທີ່ປົກຄຸມປ່າໄມ້ຈາກ 41%<br>ໃຫ້ໄດ້ 53% ໃນປີ 2010 ພ້ອມດຽວ<br>ກັນນີ້, ການປູກຢາງພາລາ, ໄມ້ວິກ,<br>ໄມ້ສັກ ແລະ ອື່ນໆ ຈະ ສາມາດປະ<br>ກອບສ່ວນເຂົ້າໃນການປູກປ່າ. | (i) ການຄຸ້ມຄອງປ່າໄມ້ໂດຍການຈັດສັນປ່າຜະລິດ, ປ່າຊົມໃຊ້ ແລະ ປ່າສະຫງວນ. ກຳນົດຂອບເຂດຊາຍແດນ ແລະ ທັງສ້າງກົດລະບຽບ.<br>(ii) ບໍ່ສາມາດບັນລຸເປົ້າໝາຍເພີ່ມເນື້ອທີ່ປົກຄຸມປ່າໄມ້ໃຫ້ໄດ້ 53% ມີພຽງແຕ່ 43,2% ເທົ່ານັ້ນ (ແຕ່ວ່າເພີ່ມຂື້ນຈາກ 41,5% ຈາກປີ 2006). | ເພີ່ມເນື້ອທີ່ປ່າໄມ້ປົກຄຸມໃຫ້ໄດ້ເຖິງ 65% ໂດຍຜ່ານແຜນງານຫຼຸດຜ່ອນການປ່ອຍທາດອາຍພິດເຮືອນແກ້ວ (REDD) ແລະ ການປ່ຽນແປງຂອງສະ ພາບດິນຟ້າອາກາດ. |